**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຄໍາມ່ວນ

ເລກທີ 60 /ຈຂ
ຄໍາມ່ວນ, ວັນທີ 28 ຕຸລາ 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງຄໍາມ່ວນ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 78/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ມະຕິຂອງຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ ສະບັບເລກທີ200/ຄປຂ.ສພຂ, ລົງວັນທີ 02 ກໍລະກົດ 2025 ວ່າດ້ວຍການຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ ຄໍາມ່ວນ;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 1432/ກສ, ລົງວັນທີ 25 ກັນຍາ 2025 ວ່າການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ;
- ອີງຕາມ ໜັງສືສະເໜີ ຂອງຄະນະຈັດຕັ້ງແຂວງ ສະບັບເລກທີ 1073/ຄຈຂ.ຄມ, ລົງວັນທີ 01 ຕຸລາ 2025;

## ເຈົ້າແຂວງ ຕົກລົງ:
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກໍານົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ,ປະຕິບັດກົດໝາຍ ແລະ ລະບຽບການຂອງລັດໃນການຄຸ້ມຄອງ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານກະສິກໍາ, ປ່າໄມ້, ພັດທະນາຊົນນະບົດ, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມຕາມທິດຍືນຍົງ ແລະ ສີຂຽວໃນຂອບເຂດຂອງແຂວງ;

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຄຳມ່ວນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກສຂ" ແມ່ນກົງຈັກການຈັດຕັ້ງໜຶ່ງຂອງແຂວງ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ ຄະນະກຳມະ ການປົກຄອງແຂວງ ແລະ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ, ພັດທະນາວຽກງານກະສິກຳ, ປ່າໄມ້, ການປຸງແຕ່ງກະສິກຳຂັ້ນຕົ້ນ, ການ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງວຽກງານອຸຕຸນິຍົມ, ອຸທົກກະສາດ ພາຍໃນແຂວງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຄຳມ່ວນ ມີໜ້າທີ່ດັ່ງລຸ່ມນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິ ຂອງສະພາແຫ່ງຊາດ, ສະພາປະຊາຊົນ ຂັ້ນແຂວງ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ, ມະຕິ ແລະ ນິຕິກຳ ຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ຄະນະກຳມະການປົກຄອງແຂວງ ກ່ຽວກັບວຽກງານຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ;
2. ເຜີຍແຜ່, ເຊື່ອມຊຶມ ແລະ ຄົ້ນຄວ້າຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ແຜນຍຸດທະສາດ ແລະ ມະຕິຕົກລົງຂອງລັດຖະບານ, ກະຊວງກະສິກຳ ແລະ ສິ່ງແວດ ລ້ອມ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ກ່ຽວກັບວຽກງານ ຂອງຂະແໜງ ກະສິກຳ ແລະ ສິ່ງແວດລ້ອມ ມາເປັນແຜນການ, ແຜນງານ, ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ ສ້າງ, ປັບປຸງ ບັນດານິຕິກຳ, ລະບຽບການ ອັນຈຳເປັນສຳລັບຄຸ້ມຄອງວຽກງານຂອງພະແນກ ໂດຍຜັນຂະຫຍາຍບັນດານິຕິກຳ, ລະບຽບການຕ່າງໆ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ວາງອອກ ຕາມລະບຽບການແບ່ງຂັ້ນຄຸ້ມຄອງ;
4. ຜັນຂະຫຍາຍ ນິຕິກຳ, ຄຳແນະນຳ, ຂໍ້ກຳນົດ, ເຕັກນິກ ແລະ ມາດຖານຜົນຜະລິດກະສິກຳ ໃນການຄຸ້ມຄອງວຽກງານລວມ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ;
5. ຊຸກຍູ້, ສົ່ງເສີມ ການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາ ຫານ ແລະ ໂພຊະນາການ; ມີວັດຖຸດິບປ້ອນໂຮງງານປຸງແຕ່ງ; ຍູ້ແຮງການຜະລິດກະສິກຳ ແລະ ປ່າໄມ້ ເປັນສິນຄ້າແບບຫຼາກຫຼາຍ ຕາມທ່າແຮງທີ່ໄດ້ປຽບຂອງທ້ອງຖິ່ນ ໂດຍມີການກຳນົດເຂດການຜະລິດຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ; ຊຸກຍູ້ການພັດທະນາ ວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ, ປອດໄພ, ຜະລິດສິນຄ້າເພື່ອຊົມໃຊ້ພາຍໃນ ນະຄອນຫຼວງວຽງຈັນ, ແຂວງ ແລະ ສະໜອງໃຫ້ຕະຫຼາດພາຍໃນປະເທດ ເພື່ອທົດແທນການນຳເຂົ້າຈາກຕ່າງປະເທດເທື່ອລະກ້າວ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມພືດ ແລະ ສັດ ຂອງປະເທດຄູ່ຄ້າ;

6. ຄຸ້ມຄອງ, ຊຸກຍູ້ສົ່ງເສີມ, ສາທິດ ແລະ ຖ່າຍທອດ ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກໍາ ກ່ຽວກັບການຜະລິດແນວພັນ ພືດ-ສັດ, ການປູກ, ການລ້ຽງ ແລະ ການປຸງແຕ່ງ; ສ້າງ, ປັບປຸງ, ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນກຸ່ມ, ສະຫະກອນ ແລະ ກອງທຶນ; ເອື້ອອໍານວຍກະສິກໍາ ແບບມີສັນຍາ, ການເຊື່ອມໂຍງຕະຫຼາດ, ເຂົ້າເຖິງແຫຼ່ງທຶນ ແລະ ປັດໄຈການຜະລິດ;
7. ພັດທະນາສູນບໍລິການເຕັກນິກກະສິກໍາ, ຊຸກຍູ້ສະຖານີບໍລິການເຕັກນິກກະສິກໍາໃຫ້ເຂັ້ມແຂງ, ຮັບປະກັນການເຄື່ອນໄຫວໃຫ້ມີປະສິດທິພາບ ດ້ວຍການປະກອບທຶນ, ພະນັກງານວິຊາການທີ່ມີຄວາມຮູ້ຄວາມສາມາດ, ປະກອບວັດຖຸ-ເຕັກນິກ ແລະ ເຕັກໂນໂລຊີທັນສະໄໝໃຫ້ແກ່ສູນ, ສະຖານີ ເພື່ອຖ່າຍທອດບົດຮຽນ, ເຕັກໂນໂລຊີການປູກ-ການລ້ຽງ, ການປຸງແຕ່ງທັງເປັນບ່ອນສາທິດໃຫ້ແກ່ຊາວກະສິກອນ, ຜູ້ປະກອບການ, ນັກສຶກສາ ແລະ ສັງຄົມ;
8. ຕິດຕາມ, ກວດກາ ມາດຕະຖານດ້ານເຕັກນິກ ແລະ ຄຸນນະພາບ ກ່ຽວກັບຜະລິດຕະພັນກະສິກໍາ, ປ່າໄມ້, ປັດໄຈການຜະລິດ, ອຸປະກອນ ແລະ ກົນຈັກກະສິກໍາ, ໂຮງງານປຸງແຕ່ງກະ ສິກໍາ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ; ຊຸກຍູ້, ສົ່ງເສີມ ແລະ ພັດທະນາຕະຫຼາດຂາຍຍົກ-ຂາຍຍ່ອຍ ຜົນຜະລິດກະສິກໍາ ແລະ ປ່າໄມ້ ຕາມກົດໝາຍ ແລະ ລະບຽບການ;
9. ຄຸ້ມຄອງ, ກວດກາ, ຢັ້ງຢືນກະສິກໍາສະອາດ, ສຸຂານາໄມ ພືດ ແລະ ສັດ ໃນການນໍາເຂົ້າ, ສົ່ງອອກຜະລິດຕະພັນກະສິກໍາ, ປ່າໄມ້ ຕາມທີ່ໄດ້ກໍານົດໃນກົດໝາຍ ແລະ ລະບຽບການຂອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ; ຄຸ້ມຄອງຕິດຕາມ, ກວດກາປັດໄຈການຜະລິດເປັນຕົ້ນຝຸ່ນ, ຢາປາບສັດຕູພືດ, ເຄມີກະສິກໍາ, ຢາປົວພະຍາດສັດ, ຢາວັກຊີນ, ອາຫານສັດ, ແນວພັນພືດ, ແນວພັນສັດ, ແນວພັນປາ-ສັດນໍ້າ, ກົນຈັກກະສິກໍາ ແລະ ອຸປະກອນການຜະລິດກະສິກໍາ ພ້ອມທັງເອື້ອອໍານວຍຄວາມສະດວກໃນການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສິນຄ້າກະສິກໍາ ແລະ ປ່າໄມ້ ຈາກປະເທດຕົ້ນທາງ ຫາປະເທດປາຍ ທາງຕາມກົດໝາຍ ແລະ ລະບຽບການ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ;
10. ຄຸ້ມຄອງ, ຊຸກຍູ້ສົ່ງເສີມ ແລະ ພັດທະນາ ໂຮງງານອຸດສາຫະກໍາປຸງແຕ່ງ ຂອງຂະແໜງກະສິກໍາ ແລະ ສິ່ງ ແວດລ້ອມ ໃຫ້ເປັນລະບົບຕ່ອງໂສ້ໃນການຄຸ້ມຄອງກໍານົດແຜນການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ຢ່າງກົມກຽວ ຕາມກົດໝາຍ ແລະ ລະບຽບການບົນພື້ນ ຖານການແບ່ງຂັ້ນຄຸ້ມຄອງ;
11. ຄຸ້ມຄອງ, ຕິດຕາມ, ກວດກາ ການນໍາໃຊ້ສານເຄມີ ເຂົ້າໃນການຜະລິດກະສິກໍາ ເປັນຕົ້ນຝຸ່ນເຄມີ, ຢາປາບສັດຕູພືດ, ຢາຂ້າຫຍ້າ, ສານຄວບຄຸມການຈະເລີນເຕີບໂຕຂອງພືດ, ການຕັດແຕ່ງພັນທຸກໍາ (GMO), ຢາປົວພະຍາດສັດ, ຢາວັກຊີນ, ຄຼີນິກປົວສັດ, ອາຫານສັດສໍາເລັດຮູບ, ວັດຖຸດິບສໍາລັບການຜະລິດ ຢາ ແລະ ອາຫານສັດ ແລະ ສານເຄມີອື່ນໆ ໃຫ້ໄດ້ຕາມມາດຕະຖານກະສິກໍາສະອາດ;
12. ຄຸ້ມຄອງ ແລະ ພັດທະນາ ລະບົບຊົນລະປະທານຫຼາຍຮູບແບບ ຕາມການແບ່ງຂັ້ນຄຸ້ມຄອງໂດຍນໍາໃຊ້ນໍ້າ ໜ້າດິນ ແລະ ນໍ້າໃຕ້ດິນ, ນໍາໃຊ້ພະລັງງານທົດແທນ ເຂົ້າໃນການສູບນໍ້າໃນບ່ອນທີ່ມີເງື່ອນໄຂ ແລະ ສ້າງໂຄງລ່າງລະບົບປ້ອງກັນ-ລະບາຍນໍ້າ ເພື່ອຕ້ານແລ້ງ, ຕ້ານຖ້ວມ ແລະ ນໍາໃຊ້ນໍ້າຊົນລະປະທານ ໃຫ້ມີປະສິດທິພາບສູງ ຕິດພັນກັບການພັດທະນາຊົນລະກະເສດ ຕາມທິດຫັນເປັນອຸດສາຫະກໍາ, ທັນສະໄໝ ແລະ ຍືນຍົງ; ສໍາ



ສະແກນດ້ວຍ CamScanner

ຫຼວດ, ຕິດຕາມການກໍ່ສ້າງ ແລະ ພັດທະນາ ລະບົບຊົນລະປະທານຂະໜາດກາງ ແລະ ນ້ອຍຕາມທ່າແຮງ ຂອງທ້ອງຖິ່ນ;

13. ຄຸ້ມຄອງປົກປັກຮັກສາປ່າໄມ້ ຕາມ 3 ລະບົບປະເພດປ່າ ເປັນຕົ້ນ ປ່າສະຫງວນແຫ່ງຊາດ ຫຼື ອຸທິຍານແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ ແລະ ປ່າຜະລິດຕາມການແບ່ງຂັ້ນຄຸ້ມຄອງ; ກຳນົດມາດຕະການ ເພື່ອຟື້ນຟູປ່າໄມ້ ແລະ ປົກປັກຮັກສາແຫຼ່ງນໍ້າ-ຄວາມສົມດຸນ ຂອງລະບົບນິເວດ ແລະ ຊີວະນາໆພັນ, ການສຳຫຼວດປ່າໄມ້, ການຢັ້ງຢືນປ່າໄມ້ພ້ອມທັງການປ້ອງກັນໄຟໄໝ້ລາມປ່າ; ສົ່ງເສີມການຟື້ນຟູບູລະນະປ່າໄມ້ ແລະ ການປູກໄມ້ເປັນສິນຄ້າ ຕິດພັນກັບການສົ່ງເສີມການທ່ອງທ່ຽວທາງທຳມະຊາດ, ການພັດທະນາກະສິກຳ, ປ່າໄມ້ ແລະ ການປູກ-ການລ້ຽງສັດ ແບບປະສົມປະສານ, ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ຍູ້ແຮງການຄ້າຂາຍສິນເຊື່ອກາກບອນປ່າໄມ້ ໃນເຂດປ່າໄມ້ທີ່ມີເງື່ອນໄຂ ຕາມທິດສີຂຽວ ແລະ ຍືນຍົງ;

14. ເປັນເຈົ້າການຈັດຕັ້ງຜັນຂະຫຍາຍການຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນຕົ້ນ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ສຳຫຼວດ ແລະ ກຳນົດ, ວາງແຜນການນຳໃຊ້ທີ່ດິນ, ຈັດສັນທີ່ດິນຂອງລັດແບບມີກຳນົດ, ປັກຫຼັກໝາຍ ເຂດທີ່ດິນສະຫງວນ, ອະນຸລັກດິນທີ່ຈະນຳໃຊ້ ແລະ ພັດທະນາການຫັນປ່ຽນປະເພດທີ່ດິນ, ຂຶ້ນທະບຽນອອກໃບຕາດິນລັດ ໃນການໃຫ້ເຊົ່າ ຫຼື ສຳປະທານ; ອອກໃບຕາດິນ ແລະ ອອກໃບຢັ້ງຢືນ ຫ້ອງຊຸດຄອນໂດມິນຽມ; ຈົດທະບຽນນິຕິກຳທີ່ດິນ; ສ້າງເຂດ ແລະ ຫົວໜ່ວຍ ລາຄາປະເມີນທີ່ດິນ; ອະນຸຍາດ ແລະ ຄຸ້ມຄອງວຽກງານທຸລະກິດ ກ່ຽວກັບທີ່ດິນ; ຄຸ້ມຄອງລະບົບຂໍ້ມູນຂ່າວສານທີ່ດິນ; ພັດທະນາທີ່ດິນແຕ່ລະປະເພດ ເປັນຕົ້ນ ທີ່ດິນກະສິກຳ ແລະ ທີ່ດິນປ່າໄມ້;

15. ຊຸກຍູ້, ຕິດຕາມ, ກວດກາວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນຕົ້ນການຂຶ້ນທະບຽນອອກໃບຕາດິນ, ອອກໃບຢັ້ງຢືນການນຳໃຊ້, ການພັດທະນາ, ປ່ຽນເປົ້າໝາຍ, ການສ້າງສຳມະໂນ ແລະ ປະເມີນລາຄາ; ຄຸ້ມຄອງ, ໃຫ້ບໍລິການວິໄຈ ແລະ ສົ່ງເສີມປັບປຸງດິນກະສິກຳ, ການຜະລິດ ແລະ ນຳໃຊ້ຝຸ່ນ ເປັນຕົ້ນອິງຄະທາດ, ຊີວະພາບ, ເຄມີ ແລະ ອື່ນໆ;

16. ພັດທະນາພື້ນຖານໂຄງລ່າງ ທີ່ຕິດພັນກັບວຽກງານກະສິກຳ ໃນເຂດຊົນນະບົດ ຕາມການແບ່ງຂັ້ນຄຸ້ມຄອງ; ພັດທະນາອາຊີບ ແລະ ປັບປຸງລະບົບການຈັດຕັ້ງການຜະລິດ ເພື່ອສ້າງລາຍຮັບ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ໃຫ້ແກ່ຊາວຊົນນະບົດ; ເປັນໃຈກາງປະສານງານກັບບັນດາພະແນກການຂັ້ນທ້ອງຖິ່ນ ໃນການພັດທະນາຊົນນະ ບົດຮອບດ້ານຕາມພາລະບົດບາດ ຂອງແຕ່ລະພາກສ່ວນ; ຄົ້ນຄວ້າ, ກຳນົດຈຸດສຸມພັດ ທະນາຊົນນະບົດເປັນແຕ່ລະໄລຍະ ຕາມທິດສາມສ້າງ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນພ້ອມທັງຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;

17. ຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ ຕາມການແບ່ງຂັ້ນຄຸ້ມຄອງ ເປັນຕົ້ນການຜັນຂະຫຍາຍຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ, ການຄຸ້ມຄອງ ທີ່ດິນບໍລິເວນນໍ້າ, ນໍ້າໃຕ້ດິນ ລວມທັງສ້າງ, ປັບປຸງສະພາບລວມ ແລະ ແຜນຄຸ້ມຄອງອ່າງຮັບນໍ້າ, ອ່າງເກັບນໍ້າ ແລະ ແຜນຄຸ້ມຄອງຄຸນນະພາບນໍ້າຕາມອ່າງຮັບນໍ້າຂະໜາດກາງ ເປັນແຕ່ລະໄລຍະ;



ສະແກນດ້ວຍ CamScanner

18. ສຳຫຼວດ, ຂຶ້ນບັນຊີ, ເກັບກຳຂໍ້ມູນປະລິມານ ແລະ ຄຸນນະພາບນ້ຳ, ທີ່ດິນບໍລິເວນນ້ຳ ແລະ ການນຳໃຊ້ນ້ຳ ພ້ອມທັງສ້າງຖານຂໍ້ມູນຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳ ຢູ່ໃນຂອບເຂດຂອງແຂວງ ທີ່ສອດຄ່ອງ ແລະ ເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານນ້ຳ ແລະ ຊັບພະຍາກອນ ນ້ຳແຫ່ງຊາດ;
19. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ, ມົນລະພິດ, ສິ່ງແວດລ້ອມໂຄງການລົງທຶນ, ສິ່ງແວດລ້ອມທົ່ວໄປ ແລະ ກິດຈະການຕ່າງໆ; ກວດກາ ແລະ ສະກັດກັ້ນການບຸກລຸກປ່າໄມ້, ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້, ການຄ້າໄມ້, ສັດນ້ຳ-ສັດປ່າ, ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ທີ່ຜິດກົດໝາຍ ເພື່ອດຳເນີນຄະດີຕໍ່ຜູ້ກະທຳຜິດ ລວມທັງການຫັນປ່ຽນທີ່ດິນປ່າໄມ້, ທີ່ດິນກະສິກຳ ແລະ ທີ່ດິນເຂດຊຸມລະປະທານ, ຊັບພະຍາກອນນ້ຳ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້ ພ້ອມທັງດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ;
20. ປັບປຸງ, ສ້າງ ແລະ ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດພາຍໃນແຂວງໃຫ້ທັນສະໄໝ; ນຳໃຊ້ຕາໜ່າງສະຖານີອຸຕຸການບິນ, ຕາໜ່າງສະຖານີອຸຕຸກະ ເສດ; ຍົກລະດັບສະຖານີຕິດຕາມແຜ່ນດິນໄຫວ ເພື່ອເຮັດການບໍລິການຂໍ້ມູນຂ່າວສານ ລວມທັງການເຮັດພະຍາກອນ ແລະ ການແຈ້ງເຕືອນໄພລ່ວງໜ້າໃຫ້ແກ່ສັງຄົມ, ການຄົມມະນາຄົມທາງອາກາດ ແລະ ການຜະລິດກະສິກຳ ຂອງທ້ອງຖິ່ນໃຫ້ທັນເວລາ;
21. ຈັດຕັ້ງປະຕິບັດ ການຕິດຕາມ, ສັງເກດການ, ເກັບກຳຂໍ້ມູນ, ສັງລວມ ແລະ ລາຍງານຂໍ້ມູນອຸຕຸນິຍົມ, ອຸທົກກະສາດ, ແຜ່ນດິນໄຫວ ແລະ ແຈ້ງເຕືອນໄພລ່ວງໜ້າ; ຄຸ້ມຄອງ, ປົກປັກຮັກສາ ແລະ ຄົ້ນຄວ້ານຳສະເໜີປັບປຸງ ສະຖານີອຸຕຸນິຍົມ, ສະຖານີອຸທົກກະສາດ, ສະຖານີແຜ່ນດິນໄຫວ ແລະ ລະບົບແຈ້ງເຕືອນໄພລ່ວງໜ້າ ເປັນແຕ່ລະໄລຍະ;
22. ຊຸກຍູ້ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ດຳເນີນການສຶກສາເບື້ອງຕົ້ນຜົນກະທົບຕໍ່ສິ່ງແວດລ້ອມ; ແຈ້ງເຕືອນ, ປັບໃໝ, ອອກ, ຕໍ່ອາຍຸ, ໂຈະ, ຖອນ ຫຼື ຍົກເລີກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ໃບອະນຸຍາດຄວບຄຸມການປ່ອຍມົນລະພິດສຳລັບໂຄງການ; ສົ່ງເສີມການສຶກສາ ແລະ ສ້າງຈິດສຳນຶກ ກ່ຽວກັບສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ; ຊຸກຍູ້ການສ້າງ ຕົວເມືອງ, ຕາແສງ, ບ້ານ, ໂຮງຮຽນ, ສຳນັກງານອົງການຂຽວສະອາດງາມຕາ ລວມທັງການຄຸ້ມຄອງສິ່ງເສດເຫຼືອ;
23. ເຊື່ອມສານແຜນຈັດສັນທີ່ດິນ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບຮອບດ້ານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂັ້ນແຂວງ; ເກັບກຳຂໍ້ມູນເພື່ອສ້າງບົດລາຍງານສະພາບສິ່ງແວດລ້ອມ ແລະ ສະພາບມົນລະພິດຂອງນະຄອນຫຼວງວຽງຈັນ, ແຂວງ; ສ້າງຄວາມເຂັ້ມແຂງໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງກ່ຽວກັບວຽກງານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດລວມທັງການຄຸ້ມຄອງສິ່ງແວດລ້ອມ ໃນທຸລະກິດຄອບຄົວ;
24. ສ້າງບົດປະເມີນ, ສ້າງແຜນທີ່ ຄວາມສ່ຽງ ແລະ ຄວາມບອບບາງຈາກການປ່ຽນແປງດິນຟ້າອາກາດ, ຄາດຄະເນການປ່ອຍທາດອາຍເຮືອນແກ້ວ; ຊຸກຍູ້ ແລະ ສົ່ງເສີມຂະແໜງ



ສະແກນດ້ວຍ CamScanner

ການທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນຈັດຕັ້ງປະຕິບັດບັນດາມາດຕະການ ແລະ ໂຄງການກ່ຽວກັບການປັບຕົວ ແລະ ການຫຼຸດຜ່ອນທາດອາຍເຮືອນແກ້ວ ພ້ອມທັງເຊື່ອມສານວຽກງານດັ່ງກ່າວ ເຂົ້າໃນແຜນງານ, ແຜນການ ຂັ້ນແຂວງ ເພື່ອກຳນົດມາດຕະ ການໃນການປັບຕົວ ແລະ ສ້າງຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ, ກຳນົດທາງເລືອກໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ສົ່ງເສີມການຊື້-ຂາຍ ສິນເຊື່ອກາກບອນ ພາຍໃນທ້ອງຖິ່ນ;

25. ຊຸກຍູ້, ສົ່ງເສີມ ການນຳໃຊ້ຜົນສຳເລັດ ຂອງການຄົ້ນຄວ້າ, ທົດລອງດ້ານວິທະຍາສາດເຕັກນິກກະສິກຳ ແລະ ສິ່ງແວດລ້ອມ, ການປັບປຸງ, ເລືອກເຟັ້ນ ແລະ ຂະຫຍາຍແນວພັນພືດ, ໄມ້, ສັດ ແລະ ສັດນ້ຳ ຕິດພັນກັບການຜະລິດເປັນສິນຄ້າ; ມີສ່ວນຮ່ວມໃນການຄຸ້ມຄອງແຫຼ່ງພັນທຸກຳ ພືດ, ສັດຂອງ ສປປ ລາວ ຕາມທີ່ກົດໝາຍກຳນົດ ແລະ ຄຸ້ມຄອງປົກປ້ອງລິຂະສິດຜົນຂອງການຄົ້ນຄວ້າທົດລອງ;

26. ຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ, ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີໃນຂະແໜງກະສິກຳ ແລະ ສິ່ງແວດລ້ອມ; ເປັນຫົວໜ່ວຍວິຊາການຂັ້ນທ້ອງຖິ່ນ ໃນວຽກງານຂອງຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ເພື່ອການປະສານງານ, ຊຸກຍູ້ສົ່ງເສີມ ແລະ ສະໜອງຂໍ້ມູນທີ່ກ່ຽວຂ້ອງທາງວິຊາການໃນການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມື ເພື່ອພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ ປີ 1995 ແລະ ການຮ່ວມມືສາກົນ ໃນຂົງເຂດການຄຸ້ມຄອງອ່າງແມ່ນ້ຳຂອງ ເປັນຕົ້ນ ການຮ່ວມມືດ້ານຊັບພະຍາກອນນ້ຳ ຂອງຂອບການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ;

27. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງ, ການກຳນົດຕຳແໜ່ງງານຂອງຂະແໜງການເປັນລະບົບຄົບຊຸດ ຕາມທິດກະທັດຮັດ, ມີປະສິດທິພາບ; ສ້າງ ແລະ ປັບປຸງ ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂອງພະແນກການ, ຜັນຂະ ຫຍາຍແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ; ຄຸ້ມຄອງ, ບຳລຸງ-ກໍ່ສ້າງສະມາຊິກພັກ, ພະນັກງານ-ລັດຖະກອນ, ພາລະກອນ; ຕີລາຄາປະເມີນຜົນສະມາຊິກພັກ, ພະນັກງານ-ລັດຖະກອນ, ພາລະກອນຕາມການແບ່ງຂັ້ນຄຸ້ມຄອງ ຢ່າງເປັນປົກກະຕິ; ປະຕິບັດນະໂຍບາຍ ແລະ ວຽກງານແຂ່ງຂັນ-ຍ້ອງຍໍຕໍ່ພະນັກງານ-ລັດຖະກອນ, ພາລະກອນພາຍໃນພະແນກຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;

28. ສ້າງ, ຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍຖານຂໍ້ມູນສະຖິຕິ ແລະ ວຽກງານຂ່າວສານຂອງພະແນກ; ສັງລວມບົດຮຽນຕົວແບບທີ່ດີ, ຜົນສຳເລັດຈາກການຄົ້ນຄວ້າທົດລອງ ພ້ອມທັງໂຄສະນາ, ເຜີຍແຜ່ອອກສູ່ສັງຄົມ ຢ່າງກວ້າງຂວາງ;

29. ເກັບກຳສະຖິຕິ ແລະ ສະໜອງ ຂໍ້ມູນຂ່າວສານດ້ານກະສິກຳ, ປ່າໄມ້, ຊີວະນາໆພັນ ແລະ ສິ່ງແວດລ້ອມ ໃຫ້ເປັນລະບົບ, ຄົບຖ້ວນຖືກຕ້ອງ ແລະ ທັນສະພາບການໂດຍນຳໃຊ້ລະບົບເຕັກໂນໂລຊີ ທີ່ທັນສະໄໝ ເພື່ອເປັນບ່ອນອີງໃນການວາງແຜນ, ການຈັດຕັ້ງປະຕິບັດໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນບັນດາແຜນງານ, ແຜນການ ແລະ ໂຄງການທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຕົນໃຫ້ມີປະສິດທິຜົນ;



ສະແກນດ້ວຍ CamScanner

30. ຄຸ້ມຄອງ, ບໍລິຫານການເງິນ ແລະ ຊັບສິນຂອງພະແນກ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະ ຫຼຸບສັງລວມ ຕາມກົດໝາຍ ແລະ ລະບຽບການ;
31. ຄົ້ນຄວ້າ, ປະກອບຄໍາເຫັນ ແລະ ຕົກລົງກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະ ເທດ ທີ່ຕິດພັນກັບວຽກງານກະສິກໍາ ແລະ ສິ່ງແວດລ້ອມພາຍໃນແຂວງບົນພື້ນຖານກົດໝາຍ ແລະ ລະບຽບການ ໃນແຕ່ລະໄລຍະ;
32. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດລະບຽບການ, ກົດ ໝາຍ, ຍຸດທະສາດ, ແຜນງານ, ແຜນການ, ໂຄງການລົງທຶນ ຂອງລັດ ຫຼື ໂຄງການທຶນກູ້ຢືມ ແລະ ຊ່ວຍເຫຼືອທາງການເພື່ອການພັດທະນາ, ນິຕິກໍາ ແລະ ລະບຽບການຕ່າງໆ ທີ່ກະຊວງກະສິກໍາ ແລະ ສິ່ງແວດລ້ອມ, ແຂວງ ວາງອອກ ໃຫ້ມີປະສິດທິພາບ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ, ແກ້ໄຂຄໍາຮ້ອງ, ຄໍາສະເໜີ ຂອງພົນລະເມືອງ ທີ່ຕິດພັນກັບພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ;
33. ສົມທົບພາກສ່ວນກ່ຽວຂ້ອງ ໃນການລະດົມທຶນ ແລະ ສະໜອງທຶນ ໃຫ້ແກ່ການຈັດຕັ້ງປະຕິບັດບັນດາໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ພາຍໃນແຂວງ, ວາງມາດຕະການໃນການຄຸ້ມຄອງ, ນໍາໃຊ້ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ການປ່ອຍສິນເຊື່ອ ຂອງທະນາຄານ ແລະ ສະຖາບັນການເງິນ ທີ່ກ່ຽວຂ້ອງ ພ້ອມທັງຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກໍານົດໄວ້;
34. ປະສານສົມທົບກັບກະຊວງກະສິກໍາ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນຂັ້ນທ້ອງຖິ່ນ ໃນການຈັດຕັ້ງປະຕິບັດໜ້າທີ່, ພາລະບົດບາດ ຂອງພະແນກເປັນແຕ່ລະໄລຍະຢ່າງເປັນລະບົບຕໍ່ເນື່ອງ;
35. ສັງລວມ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປະຈໍາເດືອນ, 3ເດືອນ, 6 ເດືອນ, 9ເດືອນ ປະຈໍາປີ, ກາງສະໄໝ ແລະ 5ປີ ຂອງພະແນກໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
36. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຄະນະກໍາມະການປົກຄອງ ຂັ້ນແຂວງ ແລະ ລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ.

**ມາດຕາ 4 ຂອບເຂດສິດ**

ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງ ມີສິດດັ່ງລຸ່ມນີ້:

1. ສະເໜີປັບປຸງກົງຈັກການຈັດຕັ້ງ, ບັນຈຸ, ສັບຊ້ອນຈັດວາງພະນັກງານນໍາພາ-ຄຸ້ມຄອງ ພາຍໃນພະແນກ ຕໍ່ຄະນະກໍາມະການປົກຄອງແຂວງ ໂດຍເອກະພາບກັບກະຊວງກະສິກໍາ ແລະ ສິ່ງແວດລ້ອມ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ; ສະເໜີການກໍານົດຕໍາແໜ່ງງານສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກໍານົດໄວ້ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
2. ຈັດຕັ້ງປະຕິບັດບັນດານິຕິກໍາ, ຄໍາແນະນໍາ, ຂໍ້ກໍານົດ, ເຕັກນິກ ແລະ ມາດຕະຖານ ທີ່ກະຊວງວາງອອກ ເພື່ອຄຸ້ມຄອງວຽກງານກະສິກໍາ, ປ່າໄມ້, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ການປຸງແຕ່ງກະສິກໍາ ແລະ ປ່າໄມ້ ແລະ ວຽກງານພັດທະນາຊົນນະບົດຂອງ



ສະແກນດ້ວຍ CamScanner

ແຂວງ; ຜັນຂະຫຍາຍຈັດຕັ້ງປະຕິບັດການຊີ້ນໍາ ຂອງກະຊວງກະສິກໍາ ແລະ ສິ່ງແວດລ້ອມ ໃນດ້ານເຕັກນິກວິຊາການ ຕາມລະບົບກົນໄກຄຸ້ມຄອງສາຍຕັ້ງ, ແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ໃນການຕົກລົງບັນຫາ; ເຜີຍແຜ່ແນວທາງນະໂຍ ບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດ ຂອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ; ຈັດກອງປະຊຸມ, ງານວາງສະແດງສິນຄ້າກະສິກໍາ ແລະ ຕະຫຼາດນັດ, ຝຶກອົບຮົມ, ສໍາມະນາວິຊາການ;

3. ຕິດຕາມ, ກວດກາ ການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ເປັນຕົ້ນດິນ, ແຮ່ທາດ, ນໍ້າ, ປ່າໄມ້, ຊີວະນາໆພັນ ແລະ ອື່ນໆ; ຕິດຕາມ, ກວດກາ ການພັດທະນາທີ່ດິນກະສິກໍາ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນແຂວງ;
4. ນໍາສະເໜີ ຮ່າງ ຍຸດທະສາດ, ແຜນແມ່ບົດ ຈັດສັນທີ່ດິນ ຂັ້ນແຂວງ; ອອກຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ, ຄໍາແນະນໍາ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ; ຄົ້ນຄວ້າ, ນໍາສະເໜີຄະນະກໍາມະການປົກຄອງແຂວງ ພິຈາລະນາ ອອກອະນຸຍາດ; ສັ່ງໂຈະ ຫຼື ຍົກເລີກ ກິດຈະກໍາໃດໜຶ່ງ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນ ແລະ ໂຮງງານຜະລິດຝຸ່ນ ຕາມການແບ່ງຂັ້ນຄຸ້ມຄອງ;
5. ກ່າວເຕືອນ ຫຼື ນໍາໃຊ້ມາດຕະການອື່ນ ຕາມກົດໝາຍ ຕໍ່ຜູ້ທີ່ສ້າງຜົນເສຍຫາຍແກ່ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ບໍ່ປະຕິບັດພັນທະທາງດ້ານສິ່ງແວດລ້ອມ ຕາມແຜນຄຸ້ມຄອງ; ຕິດຕາມ, ກວດກາ ສິ່ງແວດລ້ອມ, ສັນຍາສໍາປະທານ ແລະ ສັນຍາຕ່າງໆ ພາຍໃນແຂວງ;
6. ອອກ, ໂຈະຊົ່ວຄາວ, ຍົກເລີກ ຫຼື ຖອນໃບຢັ້ງຢືນ, ໃບອະນຸຍາດ, ໃບທະບຽນດໍາເນີນກິດຈະການ ສໍາລັບຜູ້ປະກອບການບໍລິການດ້ານກະສິກໍາ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ເຄື່ອນໄຫວບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບກົດໝາຍ ແລະ ລະ ບຽບການ;
7. ນໍາສະເໜີຂັ້ນເທິງ ພິຈາລະນາ ອອກ, ຕໍ່ອາຍຸ, ໂຈະ, ປ່ຽນແປງ ຫຼື ຖອນ ແລະ ຖອນໃບອະນຸຍາດນໍາໃຊ້ນໍ້າ ແລະ ການປ່ອຍນໍ້າເປື້ອນ ລວມທັງນໍ້າໃຕ້ດິນ, ການຂຸດເຈາະ ຫຼື ການຊີເຈາະນໍ້າໃຕ້ດິນ ແລະ ໃບອະນຸຍາດການປ່ອຍນໍ້າເປື້ອນ ແລະ ການຢັ້ງຢືນການກໍານົດປະລິມານນໍ້າໄຫຼຕໍ່າສຸດ, ການອວ່າຍແລວນໍ້າ, ອະນຸຍາດດໍາເນີນທຸລະກິດການບໍລິການໃຫ້ຄໍາປຶກ ສາກ່ຽວກັບນໍ້າ ແລະ ຊັບພະຍາກອນນໍ້າ, ການບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນ ຂອງບັນດາໂຄງການພັດທະນາ ຕາມການແບ່ງຂັ້ນຄຸ້ມຄອງ;
8. ອອກຄໍາແນະນໍາ, ແຈ້ງການ, ໜັງສືສະເໜີ ເຖິງບັນດາພະແນກການ ຂັ້ນແຂວງ, ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ໂຄງການ, ຫົວໜ່ວຍວິຊາການ ແລະ ຫົວໜ່ວຍການຜະລິດ, ຫົວໜ່ວຍທຸລະກິດ ກ່ຽວກັບວຽກງານກະສິກໍາ, ປ່າໄມ້, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ການປຸງແຕ່ງກະສິກໍາ ແລະ ວຽກງານພັດທະນາຊົນນະບົດ ພາຍໃນແຂວງ;
9. ນໍາສະເໜີຄະນະກໍາມະການປົກຄອງແຂວງ ປັບປຸງ, ໂຈະການປະຕິບັດ ຫຼື ຍົກເລີກນິຕິກໍາຂອງພະແນກການອື່ນ ແລະ ຄະນະກໍາມະການປົກຄອງເມືອງ ທີ່ຂັດກັບກົດໝາຍ ແລະ ລະບຽບການ ຂອງຂະແໜງການຕົນ;



ສະແກນດ້ວຍ CamScanner

10. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານກະສິກຳ ແລະ ປ່າໄມ້; ຢັ້ງຢືນບົດວິພາກເສດຖະກິດ-ເຕັກນິກ, ຢັ້ງຢືນແຜນນຳເຂົ້າ, ອອກ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງບົນພື້ນຖານກົດໝາຍ ແລະ ລະບຽບການ ເປັນແຕ່ລະໄລຍະ;
11. ກວດກາສະຖານທີ່ ແລະ ການດຳເນີນທຸລະກິດ ເພື່ອການຢັ້ງຢືນດ້ານຄຸນນະພາບ, ຄວາມປອດໄພສຳລັບການສະເໜີອະນຸຍາດສົ່ງອອກ, ນຳເຂົ້າ ແລະ ຂົນສົ່ງຜ່ານຜະລິດຕະພັນກະສິກຳ ແລະ ປ່າໄມ້, ບັນດາວັດຖຸອຸປະກອນ, ປັດໄຈການຜະລິດ ຕາມແຜນການທີ່ໄດ້ຮັບອະນຸມັດຈາກ ຄະນະກຳມະການປົກຄອງ ແຂວງ ຫຼື ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ; ຄຸ້ມຄອງ, ກວດກາ, ກັກກັນພືດ-ສັດ ແລະ ການກວດ ກາ, ສະກັດກັ້ນ ແລະ ຕ້ານອາຊະຍາກຳຂ້າມຊາດ ກ່ຽວກັບສັດນໍ້າ, ສັດປ່າໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ດ່ານເຂົ້າ-ອອກ ສປປ ລາວ ຕາມການມອບໝາຍສິດ ຈາກກະຊວງກະສິກຳ ແລະ ສິ່ງແວດລ້ອມ; ຄຸ້ມຄອງກວດກາ ກັກກັນພືດ-ສັດ, ການກວດກາ, ສະກັດກັ້ນ ແລະ ຕ້ານອາຊະຍາກຳຂ້າມຊາດ ກ່ຽວກັບສັດນໍ້າ, ສັດປ່າ, ໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ດ່ານທ້ອງ ຖິ່ນ ກໍລະນີມີການລະເມີດທີ່ກ່ຽວຂ້ອງກັບວຽກງານກັກກັນ ດັ່ງກ່າວນັ້ນຕາມການມອບໝາຍສິດຈາກຄະນະກຳມະການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງວາງມາດຕະການຕິດຕາມ ແລະ ສະ ກັດກັ້ນ ການແຜ່ລະບາດ ຂອງສັດຕູພືດ ແລະ ພະຍາດສັດ ໃຫ້ທັນເວລາ; ຂຶ້ນທະບຽນ, ຢັ້ງຢືນສວນປູກພືດ, ສວນໄມ້ປູກ, ຟາມລ້ຽງສັດ ແລະ ສັດນໍ້າ ຕາມການແບ່ງຂັ້ນຄຸ້ມຄອງ;
12. ຄົ້ນຄວ້າ, ວາງແຜນ ແລະ ນຳສະເໜີ ຄະນະກຳມະການປົກຄອງ ຂັ້ນແຂວງ ກ່ຽວກັບວຽກງານພັດທະນາຊົນນະບົດ ເພື່ອຊອກຫາຮູບແບບ ແລະ ວິທີການທີ່ເໝາະສົມໃນການຈັດສັນພູມລຳເນົາ, ການຝຶກອົບຮົມວິຊາຊີບ ແລະ ຈັດສັນອາຊີບຄົງທີ່ໃຫ້ປະຊາຊົນພາຍຫຼັງຢຸດຕິການຖາງປ່າເຮັດໄຮ່;
13. ນຳສະເໜີຕໍ່ ຄະນະກຳມະການປົກຄອງແຂວງ ແຕ່ງຕັ້ງຄະນະສະເພາະກິດ ເພື່ອຕິດຕາມ, ກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມການແບ່ງຂັ້ນຄຸ້ມຄອງ ໃນກໍລະນີເກີດເຫດສຸກເສີນ;
14. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ, ພະນັກງານ-ລັດຖະກອນໃນຄວາມຮັບຜິດຊອບຂອງຕົນເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ; ຫັນພະນັກງານລົງປະຈຳຢູ່ສູນ, ສະຖານີ ແລະ ກອງຄຸ້ມຄອງ 03 ປະເພດປ່າ ຢູ່ພາກສະໜາມຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
15. ຄຸ້ມຄອງ, ບຳລຸງກໍ່ສ້າງ, ນຳໃຊ້, ຈັດວາງ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ;
16. ຄຸ້ມຄອງ, ແບ່ງປັນ ແລະ ມອບໝາຍແຜນການ, ງົບປະມານ, ພາຫະນະ ແລະ ອຸປະກອນທີ່ໄດ້ຮັບອະນຸ ມັດຈາກແຂວງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ບັນດາຂະແໜງ ແລະ ທຽບເທົ່າ, ສູນ, ໂຄງການ ອ້ອມຂ້າງພະແນກ ແລະ ຫົວໜ່ວຍວິຊາການ



ສະແກນດ້ວຍ CamScanner

ທີ່ຂຶ້ນກັບຕົນ ເພື່ອນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຕາມກົດໝາຍ ແລະ ລະບຽບການໃຫ້ມີປະສິດທິຜົນສູງ;

17. ດໍາເນີນການກວດກາຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ ແລະ ໂຄງການພັດທະນາກະສິກໍາ, ປ່າໄມ້, ຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ຂອງແຂວງ ເພື່ອສະຫຼຸບສັງລວມ, ວິໄຈ ແລະ ປະເມີນຜົນ ໃຫ້ເຫັນດ້ານດີ, ດ້ານອ່ອນ-ຄົງຄ້າງ ແລະ ວາງມາດຕະການແກ້ໄຂໃນຕໍ່ໜ້າ ພ້ອມທັງລາຍງານຄະນະກໍາມະການປົກຄອງແຂວງ ແລະ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ;
18. ປະຕິບັດສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຄະນະກໍາມະການປົກຄອງແຂວງ ແລະ ລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ;
2. ຂະແໜງກວດກາ;
3. ຂະແໜງສົ່ງເສີມກະສິກໍາ ແລະ ສະຫະກອນ;
4. ຂະແໜງປູກຝັງ;
5. ຂະແໜງລ້ຽງສັດ ແລະ ການປະມົງ;
6. ຂະແໜງຊົນລະປະທານ;
7. ຂະແໜງປ່າໄມ້;
8. ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ;
9. ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ;
10. ຂະແໜງສິ່ງແວດລ້ອມ;
11. ຂະແໜງຊັບພະຍາກອນນໍ້າ, ອຸຕຸນິຍົມ ແລະ ອຸທົກກະສາດ;
12. ກອງກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
13. ກອງຄຸ້ມຄອງອຸທິຍານແຫ່ງຊາດ ພູຫີນປູນ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າພະແນກ ຈໍານວນ 01 ທ່ານ ຮັບຜິດຊອບຕໍ່ ປະທານກໍາມະການປົກຄອງແຂວງ ແລະ ລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້; ໃນເວລາຫົວໜ້າພະແນກຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າພະແນກທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ;



ສະແກນດ້ວຍ CamScanner

2. ຮອງຫົວໜ້າພະແນກ ຈຳນວນໜຶ່ງ ຊ່ວຍຫົວໜ້າພະແນກໃນການຊີ້ນຳວຽກງານຂອງຕົນ ແລະ ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າພະແນກ; ຮອງຫົວໜ້າພະແນກເປັນຜູ້ຮັກສາການແທນໃນເວລາຫົວໜ້າພະແນກຕິດຂັດ, ຮອງຫົວໜ້າພະແນກຜູ້ຮັກສາການແທນຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນໃຫ້ຫົວໜ້າພະແນກ ພາຍຫຼັງປະຈຳການ;
3. ຫົວໜ້າຂະແໜງ ແລະ ທຽບເທົ່າ; ຮອງຫົວໜ້າຂະແໜງ ແລະ ທຽບເທົ່າ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ;

- ສຳລັບຫົວໜ້າກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ຫຼື ອຸທິຍານແຫ່ງຊາດ ທີ່ກວມເອົາຫຼາຍແຂວງ ແລະ ປ່າສະຫງວນແຫ່ງຊາດ ທີ່ເປັນມໍລະດົກພາກພື້ນ ແລະ ມໍລະດົກໂລກ ດ້ານການຈັດຕັ້ງຄຸ້ມຄອງ ແມ່ນຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ໂດຍແມ່ນກົມປ່າໄມ້ເປັນເສນາທິການ ແລະ ເປັນຜູ້ຊີ້ນຳໂດຍກົງ, ບັນດາຫົວໜ້າກອງເຫຼົ່ານີ້ ແມ່ນຕຳແໜ່ງບໍລິຫານປະເພດ 4;
- ການບັນຈຸ, ສັບຊ້ອນ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້.

## ໝວດທີ 4
## ໜ້າທີ່ ຂອງຂະແໜງ

### ມາດຕາ 7 ໜ້າທີ່ ຂອງຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ.

ຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ ມີໜ້າທີ່ ດັ່ງລຸ່ມນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນໆ ຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຜັນຂະຫຍາຍ, ເຊື່ອມຊຶມແນວທາງ, ນະໂຍບາຍຂອງພັກ ແລະ ລັດຖະບານກ່ຽວກັບວຽກງານກະສິກຳ ແລະ ສິ່ງແວດລ້ອມ;
3. ເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະພະແນກ, ເປັນໃຈກາງປະສານງານປິ່ນອ້ອມລະຫວ່າງຂະແໜງການ, ກອງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ແລະ ພະແນກການຕ່າງໆ ທີ່ກ່ຽວຂ້ອງ;
4. ຄຸ້ມຄອງ, ບໍລິການ ແລະ ອຳນວຍຄວາມສະດວກ ໃນການນຳໃຊ້ລະບົບທັນສະໄໝ, ການບໍລິຫານອີງການ; ຄຸ້ມຄອງ, ຕິດຕາມ, ກວດກາເອກະສານຂາເຂົ້າ-ຂາອອກ, ການຈໍລະຈອນ ແລະ ການສຳເນົາເອກະສານ; ຄຸ້ມຄອງບໍລິຫານ, ບໍລິການ, ຈັດຕັ້ງປະຕິບັດກົນໄກປະຕູດຽວ, ວຽກງານເລຂານຸການ, ພິທີການ, ຈັດກອງປະຊຸມ, ຮັບແຂກພາຍໃນ ແລະ ຕ່າງປະເທດ ຂອງພະແນກ;
5. ເກັບກຳສະຖິຕິ ແລະ ຊີວະປະຫວັດຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບພະແນກກະສິກຳ ແລະ ສິ່ງແວດລ້ອມ ແລະ ບັນດາຫ້ອງການກະສິກຳ ແລະ ສິ່ງແວດລ້ອມ 10 ເມືອງ ສ້າງຖານຂໍ້ມູນບຸກຄະລາກອນ ຕອບສະໜອງໃຫ້ແກ່ການວາງແຜນຄຸ້ມຄອງ-ນຳໃຊ້ ພະນັກງານ;
6. ຄົ້ນຄວ້າ, ນຳສະເໜີ ການປັບປຸງກົງຈັກການຈັດຕັ້ງ, ພ້ອມທັງເປັນເຈົ້າການໃນການກຳ



ສະແກນດ້ວຍ CamScanner

ນິດຕຳແໜ່ງງານຂອງຫ້ອງການ, ຂະແໜງ, ກອງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ສະຖານີ ໃຫ້ແທດເໝາະກັບໜ້າວຽກຕົວຈິງ;

7. ຄົ້ນຄວ້າ, ນຳສະເໜີ ແຜນກໍ່ສ້າງພະນັກງານ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ພັດທະນາກົງຈັກການຈັດຕັ້ງຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມແຂວງ;
8. ຄົ້ນຄວ້າ ແລະນຳສະເໜີການບັນຈຸຊັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ການດັດແກ້ຊັ້ນ-ຂັ້ນເງິນເດືອນປົກກະຕິ, ດັດແກ້ຕາມການພົ້ນຊັ້ນ, ຕາມໃບປະກາດສະນີຍະບັດ, ດັດແກ້ປີການ, ຕາມຕຳແໜ່ງບໍລິຫານ, ສອບເສັງເອົາລັດຖະກອນໃໝ່, ເລື່ອນລັດຖະກອນຝຶກງານຂຶ້ນເປັນລັດຖະກອນສົມບູນຕາມລະບຽບການ;
9. ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນປະຈຳປີ ຕິດພັນກັບຂະບວນການຮັກຊາດ ແລະ ພັດທະນາ ໃນຂອບເຂດຄວາມຮັບຜິດຊອບຂອງພະແນກ;
10. ຄົ້ນຄວ້າ, ນຳສະເໜີ ການປະຕິບັດນະໂຍບາຍອຸດໜູນ, ບຳເນັດ, ບຳນານ, ເສຍກຳລັງແຮງງານ, ເສຍຊີວິດ, ຍ້ອງຍໍຕໍ່ພະນັກງານ-ລັດຖະກອນທີ່ມີຜົນງານ, ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ທີ່ກະທຳຜິດຕໍ່ລະບຽບ ແລະ ກົດໝາຍ ທີ່ກຳນົດໄວ້;
11. ຊຸກຍູ້, ຕິດຕາມ, ຕ້ານ ແລະ ສະກັດກັ້ນການກະທຳທຸກຮູບແບບ ທີ່ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ-ເດັກ ແລະ ການນຳໃຊ້ແຮງງານເດັກໃນທົ່ວຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;
12. ຮັບຜິດຊອບວຽກງານຕໍ່ກັບພັນທະຂອງສົນທິສັນຍາສາກົນທີ່ກ່ຽວຂ້ອງ, ເຊື່ອມໂຍງ ແລະ ຜັນຂະຫຍາຍຍຸດທະສາດຄວາມສະເໝີພາບຍິງ-ຊາຍ ເຂົ້າໃນແຜນພັດທະນາກະສິກຳ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ;
13. ເປັນເຈົ້າການຄຸ້ມຄອງ, ບໍລິຫານການເງິນ-ການບັນຊີ, ລາຍຮັບ, ລາຍຈ່າຍຕ່າງໆ ຂອງພະແນກຂອງງວດຕາມລະບຽບການ ພ້ອມທັງເກັບຄ່າທຳນຽມ, ຄ່າບໍລິການ ໃນຂົງເຂດວຽກງານກະສິກຳ ແລະ ສິ່ງແວດລ້ອມ ຕາມກົດຫມາຍ ແລະ ນິຕິກຳໃຕ້ກົດໝາຍກຳນົດໄວ້ໃນຂອບເຂດທ້ອງຖິ່ນຕົນ;
14. ຕິດຕາມ, ກວດກາ, ຮັກສາ, ຄຸ້ມຄອງພາຫະນະ, ວັດຖຸສິ່ງຂອງ, ຊັບສິນ, ຊັບສົມບັດລວມທີ່ຢູ່ໃນຄວາມຮັບຜິດ ຊອບ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ລວມທັງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ 10 ເມືອງອ້ອມຂ້າງແຂວງ;
15. ຂຶ້ນແຜນງົບປະມານຈັດຊື້-ຈັດຈ້າງ, ກໍ່ສ້າງ, ສ້ອມແປງ ຊັບສົມບັດຂອງລັດທີ່ພະແນກຄຸ້ມຄອງ;
16. ເປັນໃຈກາງໃນວຽກງານປ້ອງກັນຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບ ຮຽບຮ້ອຍຂອງພະແນກ, ການປ້ອງກັນສຳນັກງານຫ້ອງການ ແລະ ຄວາມປອດໄພໃນຖານຂໍ້ມູນ;
17. ຄົ້ນຄວ້າ, ສ້າງ, ຄຸ້ມຄອງ, ພັດທະນາ ແລະ ປັບປຸງວຽກງານຂ່າວສານກະສິກຳ ແລະ ສິ່ງແວດລ້ອມ; ສັງລວມຜົນສຳເລັດຂອງພະແນກແຕ່ລະໄລຍະ, ບົດຮຽນຕົວແບບການຜະລິດທີ່ດີ, ຜົນສຳເລັດຂອງການຄົ້ນຄວ້າທົດລອງ, ນະວັດຕະກຳ, ກະສິກຳທັນສະໄໝ, ພູມປັນຍາຊາວບ້ານ, ໂຄສະນາເຜີຍແຜ່ອອກສູ່ສັງຄົມດ້ວຍຫຼາຍຮູບແບບ ພ້ອມທັງຈັດສຳເນົາໃຫ້ເປັນລະບົບ ແລະ ມີຄວາມປອດໄພ;
18. ຮັບຜິດຊອບຄຸ້ມຄອງງົບປະມານການລົງທຶນຂອງລັດ, ກອງທຶນພັດທະນາ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມ, ການລົງທຶນຂອງຜູ້ປະກອບການ ແລະ ທຶນອື່ນໆ;



ສະແກນດ້ວຍ CamScanner

19. ຈັດຕັ້ງປະຕິບັດລະບຽບການໃນການຄຸ້ມຄອງວຽກງານແຜນການ, ແຜນງົບປະມານການລົງທຶນຂອງລັດ, ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ, ການຮ່ວມມືກັບສາກົນ, ເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ໃນການລົງທຶນທຸລະກິດໂຄງການ ແລະ ວຽກງານສະຖິຕິກະສິກຳ ແລະ ສິ່ງແວດລ້ອມ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
20. ປະສານງານວຽກງານການຮ່ວມມື, ການຊ່ວຍເຫຼືອ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງທຶນໂຄງການ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມຂອງສາກົນ, ເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ, ທຸລະກິດໂຄງການ, ວຽກງານສະຖິຕິກະສິກຳ ແລະ ສິ່ງແວດລ້ອມ ຈາກແຫຼ່ງທຶນອື່ນໆ ບົນພື້ນຖານສ້າງເປັນໂຄງການຄຸ້ມຄອງຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;
21. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແຜນການ ແລະ ແຜນງົບປະມານການລົງທຶນຂອງລັດ, ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ, ໂຄງການລົງທຶນຂອງຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດໃນຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;
22. ຄົ້ນຄວ້າ, ສ້າງແຜນການເຄື່ອນໄຫວປະຈຳເດືອນ, ປະຈຳ 3ເດືອນ, 6ເດືອນ, 9ເດືອນ, ປະຈຳປີ ແລະ 5ປີ ຮ່ວມກັບຄະນະພັກ ແລະ ຄະນະພະແນກ ພ້ອມທັງປະສານກັບບັນດາຂະແໜງການທີ່ກ່ຽວຂ້ອງອ້ອມຂ້າງພະແນກ ແລະ ເມືອງ ເພື່ອອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານ ໃຫ້ມີຜົນສຳເລັດ;
23. ເປັນໃຈກາງໃນການສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານກະສິກຳ ແລະ ສິ່ງແວດລ້ອມ ປະຈຳອາທິດ, ເດືອນ, 3ເດືອນ, 6ເດືອນ, 9ເດືອນ, ປະຈຳປີ ແລະ 5ປີ ລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
24. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

**ມາດຕາ 8 ໜ້າທີ່ຂອງຂະແໜງກວດກາ**

ຂະແໜງກວດກາ ມີໜ້າທີ່ ດັ່ງລຸ່ມນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ມະຕິ, ຄຳສັ່ງ, ຄຳແນະນຳຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ ກ່ຽວກັບວຽກງານກວດກາໃນຂົງເຂດກະສິກຳ ແລະ ສິ່ງແວດລ້ອມ ແລະ ອົງການກວດກາລັດແຂວງໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາເຜີຍແຜ່ແນວທາງ, ແຜນນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ຜັນຂະຫຍາຍມະຕິກອງປະຊຸມວຽກງານກວດກາຂັ້ນສູນກາງ, ຂັ້ນແຂວງ ແລະ ພະແນກການຕົນ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງຂະແໜງການຕົນ ພ້ອມທັງຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ;



ສະແກນດ້ວຍ CamScanner

4. ກວດກາການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ໂຄງການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງບັນດາຂະແໜງການພາຍໃນພະແນກ, ຫ້ອງການຂັ້ນເມືອງຕາມສາຍຕັ້ງ ທີ່ນຳໃຊ້ຊັບສິນ ແລະ ງົບ ປະມານຂອງລັດ;
5. ເປັນເຈົ້າການໃນການຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ ຂອງພະນັກງານ-ລັດຖະກອນຂອງຕົນ;
6. ຊຸກຍູ້ ແລະ ກວດກາການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ມີປະກົດການລະເມີດກົດໝາຍ ແລະ ລະບຽບການຕ່າງໆ ຕາມການມອບໝາຍ;
7. ກວດກາການຈັດຕັ້ງປະຕິບັດການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງບັນດາໜ່ວຍພັກທີ່ຂຶ້ນກັບຮາກຖານພັກພະແນກກະສິກຳ ແລະ ສິ່ງແວດລ້ອມ ລວມທັງການຂະຫຍາຍສະມາຊິກພັກ;
8. ຕິດຕາມ, ກວດກາ ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການເກັບລາຍຮັບເຂົ້າງົບປະມານ, ການຄຸ້ມຄອງລາຍຮັບ-ລາຍຈ່າຍ, ການລະເມີດວິໄນແຜນການ-ການເງິນ, ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ ໃນຂອບເຂດຄວາມຮັບຜິດຊອບ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ;
9. ຕິດຕາມ, ກວດກາ ການແຈ້ງຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງພະແນກ;
10. ດຳເນີນການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ, ສະຫຼຸບ ແລະ ປະກອບສຳນວນ ສົ່ງໃຫ້ຄະນະພັກ, ຄະນະນຳພະແນກ ພິຈາລະນາ;
11. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຄຳສະເໜີຂອງພົນລະເມືອງ ແລະ ການຈັດຕັ້ງກ່ຽວກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດຕໍ່ກົດໝາຍ, ລະບຽບການຂອງການຈັດຕັ້ງ ແລະ ພະນັກງານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງພະແນກ;
12. ສະເໜີຫົວໜ້າພະແນກ ໂຈະຊົ່ວຄາວຕໍ່ການເຄື່ອນໄຫວວຽກ, ການປະຕິບັດໜ້າທີ່, ການສັບຊ້ອນ, ການແຕ່ງຕັ້ງ, ການຍົກຍ້າຍໄປຮັບໜ້າທີ່ໃໝ່ ຕໍ່ກັບສະມາຊິກພັກ, ພະນັກງານ-ລັດຖະກອນ ຂອງພະແນກ ທີ່ພວມຖືກກວດກາ ຫຼື ໃນເວລາດຳເນີນການກວດກາບໍ່ທັນສຳເລັດ ຫຼື ເປັນເປົ້າໝາຍການກວດກາ;
13. ສະເໜີດຳເນີນການແກ້ໄຂຜົນການກວດກາລັດ ຂອງອົງການກວດກາລັດແຂວງ ແລະ ຜົນການກວດສອບ ຂອງຄະນະກວດສອບປະຈຳພາກກາງ ໃຫ້ຄະນະພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ເພື່ອພິຈາລະນາຕົກລົງ;
14. ສະຫຼຸບລາຍງານຜົນການກວດກາພັກ-ລັດ ລວມທັງວຽກງານແກ້ໄຂຜົນການກວດກາຂອງຄະນະພັກ, ຄະນະໜ່ວຍພັກ ໃນແຕ່ລະໄລຍະ ໃຫ້ຄະນະພັກຮາກຖານ ແລະ ຄະນະກວດກາພັກ-ລັດແຂວງ;
15. ຂຶ້ນແຜນ, ຄຸ້ມຄອງນຳໃຊ້ງົບປະມານ, ພາຫະນະ ແລະ ຊັບສິນບັດຮັບໃຊ້ຕ່າງໆໃຫ້ແກ່ການເຄື່ອນໄຫວຂອງຂະແໜງກວດກາລັດ;



ສະແກນດ້ວຍ CamScanner

16. ສະຫຼຸບ, ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານ ປະຈໍາອາທິດ, ເດືອນ, 3ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈໍາປີ, ແຜນຍຸດທະສາດ 5 ປີ, ເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ;
17. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບ ໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

**ມາດຕາ 9 ໜ້າທີ່ ຂອງຂະແໜງສົ່ງເສີມ ແລະ ສະຫະກອນ**

ຂະແໜງສົ່ງເສີມ ແລະ ສະຫະກອນ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍຂອງພັກ, ກົດໝາຍ, ນິຕິກໍາ, ຄໍາແນະນໍາ, ແຜນຍຸດທະສາດ ມາເປັນແຜນງານ, ແຜນການ ແລະ ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດ ຕາມບົດບາດໜ້າທີ່ຂອງຕົນໃຫ້ປະກົດຜົນເປັນຈິງ;
2. ສ້າງ ແລະ ປັບປຸງນິຕິກໍາໃຕ້ກົດໝາຍ, ລະບຽບການ, ຫຼັກການ ແລະ ວິທີການ ກ່ຽວກັບການສ້າງຕັ້ງ ແລະ ຄຸ້ມຄອງກຸ່ມຜະລິດ ແລະ ສະຫະກອນ ແລະ ຮູບແບບການຈັດຕັ້ງຮ່ວມມືອື່ນໆ ໃຫ້ມີຄວາມສອດຄ່ອງ ແລະ ສາມາດເຊື່ອມໂຍງກັບສາກົນພ້ອມທັງເຜີຍແຜ່ອອກສູ່ສັງ ຄົມຢ່າງກວ້າງຂວາງ;
3. ເກັບກໍາ, ຂຶ້ນບັນຊີ ກຸ່ມຜະລິດ ແລະ ສະຫະກອນໃນທົ່ວແຂວງເພື່ອຄຸ້ມຄອງຢ່າງລວມສູນພ້ອມທັງສ້າງຖານຂໍ້ມູນ, ສັງລວມລາຍງານ ແລະ ສະໜອງຂໍ້ມູນໃຫ້ຂັ້ນເທິງ ແລະພາກສ່ວນທີ່ກ່ຽວຂ້ອງ;
4. ຄົ້ນຄວ້າ, ພິຈາລະນາມີຄໍາເຫັນຕໍ່ການອານຸມັດສ້າງຕັ້ງ, ໂຮມ, ແຍກ ຫຼື ຍົກເລີກກຸ່ມຜະລິດ ແລະ ສະຫະກອນ; ປັບປຸງກຸ່ມການຜະລິດ ແລະ ສະຫະກອນ ຕິດພັນກັບການສົ່ງເສີມ ແລະ ປັບປຸງຮູບແບບການຜະລິດເປັນສິນຄ້າ, ສະບຽງອາຫານ-ໂພຊະນາການ ດ້ວຍການຜະລິດແບບຜູກພັນຕາມສັນຍາໃຫ້ເປັນຂະບວນກວ້າງຂວາງ, ເຂັ້ມແຂງກ້າວໄປສູ່ການສ້າງເປັນສະຫະກອນທີ່ເຂັ້ມແຂງ ຢູ່ບັນດາເຂດຈຸດສຸມຜະລິດສະບຽງອາຫານ, ເຂດຈຸດສຸມຜະລິດເປັນສິນຄ້າ ເພື່ອຮັບໃຊ້ພາຍໃນທົດແທນການນໍາເຂົ້າ ແລະ ສົ່ງອອກ;
5. ຜັນຂະຫຍາຍ ນິຕິກໍາ, ລະບຽບການ, ວິທີການ, ເຄື່ອງມື ແລະ ບົດແນະນໍາໃນການອອກໃບອະນຸຍາດສ້າງຕັ້ງກຸ່ມ ແລະ ການຂຶ້ນທະບຽນສະຫະກອນ, ການຄຸ້ມຄອງກຸ່ມຜະລິດ ແລະ ສະຫະກອນ, ຫົວໜ່ວຍເສດຖະກິດຮ່ວມມືອື່ນ ຂອງປະຊາຊົນ ແລະ ຕິດຕາມກວດກາການ ຈັດຕັ້ງປະຕິບັດຢ່າງເປັນລະບົບ;
6. ສົ່ງເສີມການນໍາໃຊ້ຜົນສໍາເລັດການປັບປຸງແນວພັນທາງດ້ານວິທະຍາສາດ, ອຸປະກອນກົນຈັກກະສິກໍາ, ວິທີການກະເສດສຸມ ແລະ ແບບປະສົມປະສານ ເພື່ອຍົກສະມັດຕະພາບ, ຄຸນນະພາບຂອງຜົນຜະລິດ ແລະ ມີໂພສະຊະນາການ ຕາມຫຼັກການກະສິກໍາສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
7. ຜັນຂະຫຍາຍຫຼັກສູດ ແລະ ຈັດຝຶກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ພະນັກງານຢູ່ຂັ້ນເມືອງ ແລະ ທ້ອງຖິ່ນ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງກຸ່ມຜະລິດ ແລະ ສະຫະກອນ ໃຫ້ເປັນລະບົບໃນທົ່ວແຂວງ;



ສະແກນດ້ວຍ CamScanner

8. ເອື້ອອຳນວຍ, ສ້າງເງື່ອນໄຂ ໃຫ້ກຸ່ມຜະລິດ, ສະຫະກອນ ແລະ ຮູບແບບການຈັດຕັ້ງຮ່ວມມືອື່ນ ສາມາດເຂົ້າເຖິງແຫຼ່ງທຶນ, ເຕັກນິກ, ປັດໄຈການຜະລິດ ແລະ ຕະຫຼາດ ດ້ວຍການສ້າງຂໍ້ແນະນຳ, ຝຶກອົບຮົມ ແລະ ທັດສະນະສຶກສາແລກປ່ຽນບົດຮຽນຢູ່ພາຍໃນ ແລະ ຕ່າງປະເທດ ແນໃສ່ໃຫ້ການ ເຄື່ອນໄຫວ ມີປະສິດທິພາບ;

9. ສົມທົບ ແລະ ຊຸກຍູ້ ບັນດາເມືອງ ແລະ ບ້ານ ເພື່ອສ້າງຄວາມເຂັ້ມແຂງໃນການຜະລິດເປັນສິນຄ້າຂອງກຸ່ມການຜະລິດຢູ່ ຈຸດສຸມພັດທະນາ ແລະ ບ່ອນທີ່ມີເງື່ອນໄຂກ້າວເປັນສະຫະກອນທີ່ເຂັ້ມແຂງ;

10. ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ ບົດບາດໜ້າທີ່, ໝາກຜົນການຜະລິດ ແລະ ການດຳເນີນກິດຈະການ ເພື່ອສັງລວມ ສະເໜີປະຕິບັດນະໂຍບາຍ-ຍ້ອງຍໍ ໃຫ້ກຽດຕິຄຸນຕໍ່ບຸກຄົນ, ຫົວໜ່ວຍກຸ່ມ, ສະຫະກອນ, ກອງທຶນ ແລະ ຟາມ ທີ່ດີເດັ່ນ;

11. ປະສານງານ, ຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງການຊ່ວຍເຫຼືອ ທາງດ້ານງົບປະມານ ແລະ ເຕັກນິກວິຊາການ ບົນພື້ນຖານການຕົກລົງເຫັນດີຂອງຂັ້ນເທິງ;

12. ສ້າງຂີດຄວາມອາດສາມາດຂອງນັກສົ່ງເສີມຂັ້ນເມືອງ, ສະຖານີບໍລິການເຕັກນິກກະສິກຳ ແລະ ວິຊາການບ້ານ ໃຫ້ມີຄວາມເຂັ້ມແຂງໃນການປະຕິບັດວຽກສາທິດ, ຝຶກອົບຮົມ, ຄຸ້ມຄອງກອງທຶນ ແລະ ສາທິດເຕັກນິກ, ເຕັກໂນໂລຊີ, ນະວັດຕະກຳ ແລະ ທັກສະກະສິກຳສະໄໝໃໝ່ເຂົ້າໃນການປູກ, ການລ້ຽງ ແບບປະສົມປະສານ ຕາມຫຼັກການກະສິກຳສະອາດ, ການອົບ, ຕາກ, ຄັດແຍກ,ຈັດເກຣດ, ການຫຸ້ມຫໍ່ສ້າງມູນຄ່າລາຄາເພີ່ມ ແລະ ການຕະຫຼາດໃຫ້ແກ່ຊາວກະສິກອນ, ກຸ່ມຜູ້ຜະລິດ, ກຸ່ມປຸງແຕ່ງ, ຜູ້ປະກອບການທຸລະກິດກະສິກຳ ລວມທັງຮ່ວມຈັດງານວາງສະແດງສິນຄ້າກະສິກຳ, ການຈັດທັດສະນະສຶກສາແລກປ່ຽນບົດຮຽນ;

13. ຜະລິດແນວພັນເຂົ້າລຸ້ນ2, ສົ່ງເສີມການຜະລິດແນວພັນລຸ້ນ3, ແນວພັນພືດ, ສັດ ແລະ ສັດນ້ຳ ພ້ອມທັງໂຄສະນາ ເຜີຍແຜ່ຊຸກຍູ້ສົ່ງເສີມການຜະລິດ ແລະ ນຳໃຊ້ແນວພັນດັ່ງກ່າວໃຫ້ກວ້າງຂວາງ ເພື່ອຕອບສະໜອງແນວພັນໃຫ້ແກ່ການຜະລິດສິນຄ້າຮັບໃຊ້ພາຍໃນຫຼຸດຜ່ອນການນຳເຂົ້າ ແລະ ຜະລິດສິນຄ້າທີ່ມີຕະຫຼາດ, ຜະລິດກະສິກຳແບບມີສັນຍາເພື່ອສົ່ງອອກ ດ້ວຍການປະສານສົມທົບບັນດາຫ້ອງ ການກະສິກຳ ແລະ ສິ່ງແວດລ້ອມເມືອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຂະຫຍາຍຕາໜ່າງການຜະລິດແນວພັນຂອງຄອບຄົວ, ຟາມ, ຫົວໜ່ວຍທຸລະກິດ, ກຸ່ມຜະລິດ ແລະ ສະຫະກອນໃຫ້ຖືກ ຕ້ອງຕາມຂະບວນການ, ຂັ້ນຕອນດ້ານວິຊາການ ແລະ ມີຕາໜ່າງການກວດສອບ, ຢັ້ງຢືນຄຸນນະພາບແນວພັນ;

14. ປະສານສົມທົບກັບຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອມີກົນໄກການບໍລິການແຫ່ງທຶນ,ສິນເຊື່ອປັດໄຈການຜະລິດ, ແນະນຳເຕັກນິກວິຊາການ ແລະ ເຂົ້າເຖິງຕະຫຼາດໃຫ້ແກ່ກຸ່ມສະຫະກອນ ແລະ ຊາວກະສິກອນ ເພື່ອຍົກປະລິມານ ແລະ ຄຸນນະພາບຂອງຜົນຜະລິດກະສິກຳຕາມທິດຫັນເປັນກົນຈັກທັນສະໄໝ, ສີຂຽວຍືນຍົງ.



ສະແກນດ້ວຍ CamScanner

15. ສົ່ງເສີມການຈັດຕັ້ງເປັນກຸ່ມຜະລິດ, ຟາມ ແລະ ຫົວໜ່ວຍທຸລະກິດກະສິກຳແບບຜູກພັນຕາມສັນຍາໃຫ້ເປັນຂະບວນການກ້ວາງຂວາງ ກ້າວໄປສູ່ການສ້າງເປັນສະຫະກອນ ຫຼື ເປັນຫົວໜ່ວຍເສດຖະກິດຮ່ວມມືໃນຮູບແບບຕ່າງໆ ໃຫ້ມີຄວາມເຂັ້ມແຂງ ເພື່ອປັບປຸງການຜະລິດເປັນສິນຄ້າພາຍໃນ ແລະ ຫຼຸດຜ່ອນການນຳເຂົ້າ, ເປັນສະບຽງອາຫານ-ໂພສະນາການໃຫ້ມີຄຸນນະພາບ;
16. ປະສານ ຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງການຊ່ວຍເຫຼືອ ທາງດ້ານງົບປະມານ ແລະ ເຕັກນິກວິຊາການບົນພື້ນຖານການຕົກລົງເຫັນດີຂອງຄະນະນຳຂັ້ນຖັດຕົນ;
17. ສ້າງແຜນສະເໜີຂໍງົບປະມານ, ກິດຈະກຳ ແລະ ສະຫຼຸບລາຍງານຢ່າງເປັນປົກກະຕິ; ນຳສະເໜີຂໍອະນຸມັດໂຄງການ, ງົບປະມານຂອງລັດ ແລະ ແຫຼ່ງທຶນອື່ນໆ ພ້ອມທັງຄຸ້ມຄອງນຳໃຊ້ຊັບສິນ, ງົບປະມານ, ຊັບພະຍາກອນ ຂອງຂະແໜງສົ່ງເສີມກະສິກຳ ແລະ ສະຫະກອນ ໃຫ້ມີປະສິດທິພາບ,ໂປ່ງໃສ ແລະ ສາມາດກວດສອບໄດ້;
18. ສະຫຼຸບ ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານສົ່ງເສີມກະສິກຳ ປະຈຳເດືອນ, 3 ເດືອນ, 6ເດືອນ, 9ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງປົກກະຕິ;
19. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

### ມາດຕາ 10 ໜ້າທີ່ ຂອງຂະແໜງປູກຝັງ

ຂະແໜງປູກຝັງມີໜ້າທີ່ ດັ່ງລຸ່ມນີ້:

1. ປະຕິບັດກົດໝາຍ, ດຳລັດນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງອົງການປົກຄອງແຂວງ ແລະ ກະຊວງກະສິກຳ ແລະ ສິ່ງແວດລ້ອມໃນແຕ່ລະໄລຍະ;
2. ຜັນຂະຫຍາຍນະໂຍບາຍກະສິກຳສະອາດ ແລະ ຍຸດທະສາດ ພັດທະນາການປູກຝັງໃຫ້ເປັນແຜນງານ ໂຄງການ ແລະ ກິດຈະກຳອັນລະອຽດ ຢູ່ພາຍໃນແຂວງ. ພ້ອມທັງກຳນົດເຂດ ແລະ ຈຸມສຸມໃນການຫັນປ່ຽນເຂົ້າສູ່ລະບົບການຜະລິດກະສິກຳສະອາດ;
3. ໂຄສະນາ ເຜີຍແຜ່ ບັນດາເງື່ອນໄຂ, ຂໍ້ກຳນົດ, ນິຕິກຳ ແລະ ຄູ່ມືຕ່າງໆວຽກງານປຸງແຕ່ງວຽກງານພືດ ແລະ ກົນຈັກກະສິກຳ;
4. ກວດກາ ແລະ ຢັ້ງຢືນສຸຂະນາໄມພືດ ສຳລັບການສົ່ງອອກ, ສົ່ງອອກຕໍ່, ນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມອື່ນໆ ຢູ່ດ່ານກັກກັນພືດສາກົນ, ຄຸ້ມຄອງ, ຈັດຕັ້ງປະຕິບັດວຽກງານກັກກັນພືດປະຈຳດ່ານ, ກັກກັນພືດປະຈຳດ່ານທ້ອງຖິ່ນ ແລະ ດ່ານປະເພນີ;
5. ສຳຫຼວດ, ເກັບກຳຂໍ້ມູນ, ກວດກາ, ຕິດຕາມ, ເຝົ້າລະວັງ, ພະຍາກອນ, ປ້ອງກັນ ແລະ ກຳຈັດ, ນຳສະເໜີ ພະແນກກະສິກຳ ແລະ ສິ່ງແວດລ້ອມ ອອກແຈ້ງການເຕືອນ, ບົດແນະນຳດ້ານເຕັກນິກ-ການປ້ອງກັນ ແລະ ຄວບຄຸມສັດຕູພືດ ໃນແຕ່ລະຊວງລະດູການ, ສະຫຼຸບ ແລະ ລາຍງານກ່ຽວກັບສັດຕູພືດ, ຄວບຄຸມ ແລະ ທຸລະກິດສຸຂານາໄມພືດສະຖານີກັກກັນພືດ ໃນທ້ອງຖິ່ນຂອງຕົນ;



ສະແກນດ້ວຍ CamScanner

6. ກວດກາ, ທົດສອບ ແລະວິໄຈສານເຄມີຕົກຄ້າງ, ຢາປາບສັດຕູພືດ, ຝຸ່ນເຄມີ, ຝຸ່ນອິນຊີ, ຝຸ່ນຊີວະພາບ, ແນວພັນພືດກ່ອນການຂຶ້ນທະບຽນ, ການນໍາເຂົ້າ, ການຈໍາໜ່າຍ ແລະ ການນໍາໃຊ້ຢູ່ໃນທ້ອງຖິ່ນຂອງຕົນ;
7. ຂຶ້ນແຜນ, ຄຸ້ມຄອງການນໍາໃຊ້ງົບປະມານ, ພາຫະນະ ແລະ ຊັບສິນບັດຕ່າງໆ ພ້ອມທັງ ຕິດຕາມກວດກາ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;
8. ສ້າງ ແລະ ພັດທະນາຕາໜ່າງປ້ອງກັນພືດ ແຕ່ຂັ້ນແຂວງ, ເມືອງ ແລະ ບ້ານ ໂດຍສະເພາະແມ່ນການສ້າງວິຊາການດ້ານປູກຝັງປະຈໍາບ້ານເພື່ອຕິດຕາມເຝົ້າລະວັງ, ປ້ອງກັນ, ຄວບຄຸມ, ກໍາຈັດສັດຕູພືດ ຫຼື ຫາວິທີການແກ້ໄຂ ທາງດ້ານວິຊາການທີ່ເໝາະສົມ, ໃນກໍລະນີເກີດການຕິດແປດ ຫຼື ແຜ່ລະບາດຂອງສັດຕູພືດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ປະສານສົມທົບກັບຜູ້ຜະລິດ, ຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດ ພາຍໃນແຂວງ ໃນການປະຕິບັດມາດຕະຖານ ແລະ ການຂໍການຢັ້ງຢືນຕາມມາດຕະຖານກະສິກໍາສະອາດໂດຍສະເພາະແມ່ນກະສິກໍາອິນຊີ ແລະ ກະສິກໍາທີ່ດີ ແລະ ມາດຕະຖານອັນອື່ນທີ່ກ່ຽວຂ້ອງໃຫ້ແກ່ຜູ້ປະກອບການພາຍໃນ ຂອບເຂດທີ່ຕົນຮັບຜິດຊອບ;
10. ຄົ້ນຄ້ວາ ແລະ ສະເໜີພະແນກອອກ, ໂຈະ ຫຼື ຖອນໃບອະນຸຍາດນໍາເຂົ້າ ປັດໃຈການຜະລິດເຊັ່ນ: ແນວພັນ, ຝຸ່ນ, ຢາປາບສັດຕູພືດ, ພ້ອມທັງກວດກາ, ຕິດຕາມການນໍາເຂົ້າ, ການຈໍາໜ່າຍ ແລະ ການບໍລິການ, ບໍາລຸງ ແລະ ຍົກລະດັບບຸກຄະລາກອນຂັ້ນເມືອງກ່ຽວກັບວຽກງານຄຸ້ມຄອງ, ກວດກາ ແລະ ນໍາໃຊ້ຢາປາບສັດຕູພືດ;
11. ຄົ້ນຄວ້າ ແລະ ສະເໜີ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຕ່ງຕັ້ງ ຫຼື ຍົກຍ້າຍ ເຈົ້າໜ້າທີ່ດ່ານກັກກັນພືດທ້ອງຖິ່ນ ແລະ ດ່ານປະເພນີ, ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຝຸ່ນ ແລະ ແນວພັນ;
12. ຄົ້ນຄ້ວາ, ປະກອບຄໍາເຫັນ ທາງດ້ານວິຊາການ ໃນການອອກໃບອະນຸຍາດ ດໍາເນີນກິດຈະ ການດ້ານປູກຝັງ, ຂໍຈົດ ແລະ ຂຶ້ນທະບຽນໂຮງງານ ປຸງແຕ່ງພືດ, ກົນຈັກ ແລະ ເຄື່ອງມືຮັບໃຊ້ການຜະລິດກະສິກໍາ, ການອະນຸຍາດສ້າງໂຮງງານປຸງແຕ່ງພືດ, ການຂໍຈົດທະບຽນຢາປາບສັດຕູພືດ, ຝຸ່ນ ແລະ ແນວພັນພືດ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ, ການອະນຸຍາດນໍາເຂົ້າ, ຈໍາໜ່າຍກົນຈັກ, ອາໄຫລ່ກົນຈັກ ແລະ ເຄື່ອງມືຮັບໃຊ້ການຜະລິດພືດ ໃຫ້ຖືກຕ້ອງຕາມລະບຽບຫຼັກການ;
13. ຄຸ້ມຄອງ, ຕິດຕາມ, ກວດກາ, ອອກໃບທະບຽນພື້ນທີ່ປູກ (ພືດ, ໄມ້ໃຫ້ໝາກ) ແລະ ສະຖານທີ່ຫຸ້ມຫໍ່, ບັນຈຸ ຜະລິດຕະພັນໝາກໄມ້ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂການນໍາເຂົ້າຂອງປະເທດຄູ່ຄ້າ;
14. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ການພັດທະນາໂຮງສີເຂົ້າ, ໂຮງງານປຸງແຕ່ງມັນຕົ້ນ, ໂຮງງານປຸງແຕ່ງອ້ອຍ, ໂຮງງານປຸງແຕ່ງພືດ, ຜະລິດຕະພັນພືດອື່ນໆ, ຄຸ້ມຄອງ ແລະ ເກັບກໍາສະຖິຕິກົນຈັກ ແລະ ເຄື່ອງມືຮັບໃຊ້ການປູກຝັງ, ກໍານົດແຜນການຜະລິດ, ການປຸງແຕ່ງ, ການຕະຫຼາດ, ຄຸ້ມຄອງ, ກວດກາ, ມາດຕະຖານໂຮງງານປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພໃນການປຸງແຕ່ງ, ການຫຸ້ມຫໍ່ ແລະ ອື່ນໆ ຢູ່



ສະແກນດ້ວຍ CamScanner

ໃນໂຮງງານປຸງແຕ່ງພືດ ແລະ ໝາກໄມ້;

15. ເກັບກຳ, ສັງລວມຂໍ້ມູນບັນດາໂຮງງານປຸງແຕ່ງຜະລິດຕະພັນຈາກພືດ ແລະ ຜະລິດພືດ, ໂຮງສີເຂົ້າ, ຜູ້ປະກອບການ ກ່ຽວກັບວຽກງານປຸງແຕ່ງພືດ ແລະ ການນຳໃຊ້ເຄື່ອງມືກົນຈັກກະສິກຳ;
16. ສຶກສາ ແລະ ສ້າງສວນຕົວແບບການຂະຫຍາຍພັນໄມ້ໃຫ້ໝາກ, ພືດຜັກກິນຫົວ, ກິນໃບ, ໃນລະບົບກະສິກຳທີ່ດີ, ກະສິກຳອິນຊີ ພ້ອມທັງດຳເນີນການສາທິດດ້ານການປູກ ຮ່ວມກັບຊາວກະສິກອນ, ຜູ້ປະກອບການ ເພື່ອຂະຫຍາຍຜົນການຄົ້ນຄ້ວາ, ທົດລອງ ແລະ ຜົນການປະຕິບັດທີ່ດີເດັ່ນ, ຕາມທ່າແຮງຕົວຈິງແນໃສ່ຕອບສະໜອງ, ເອື້ອອຳນວຍໃຫ້ການຮຽນຮູ້ ແລະ ການແລກປ່ຽນ ບົດຮຽນຂອງຊາວກະສິກອນ ຜູ້ປະກອບການ ໃນການຍົກຜະລິດຕະພາບ ແລະ ຄຸນນະພາບຂອງ ຜົນຜະລິດກະສິກຳ;
17. ຊຸກຍູ້ ແລະ ສົ່ງເສີມການນຳໃຊ້ຜົນສຳເລັດໃໝ່ທາງດ້ານວິທະຍາສາດ-ວິທະຍາການ ເພື່ອຍົກສະມັດຕະພາບໃນການປູກຝັງ ຕາມທິດພັດທະນາກະສິກຳສະອາດ, ປະສົມປະສານ ແລະ ຕິດພັນສະນິດແໜ້ນການຈັດຕັ້ງເປັນກຸ່ມຮຽນຮູ້, ກຸ່ມຜະລິດ ຫຼື ສະຫະກອນຕາມເງື່ອນໄຂ ແລະ ທ່າແຮງ;
18. ເປັນເຈົ້າການ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດງານວາງສະແດງຕະຫຼາດນັດສິນຄ້າກະສິກຳ, ງານພົບປະແລກປ່ຽນຄຳຄິດເຫັນລະຫວ່າງລັດ, ຜູ້ປະກອບການ, ຜູ້ຜະລິດ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງຕາມເງື່ອນໄຂ, ທ່າແຮງດ້ວຍການປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນຂອງຕົນ.
19. ຊຸກຍູ້ສົ່ງເສີມ ການສ້າງຄອບຄົວຕົວແບບ, ກຸ່ມຕົວແບບ ແລະ ວິຊາການກັບທີ່ໃນດ້ານເຕັກນິກການຜະລິດ ແລະ ການປຸງແຕ່ງກະສິກຳ ພ້ອມດຽວກັນນັ້ນ ສະເໜີໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ອອກໃບຢັ້ງຢືນດ້ານວິຊາການໃຫ້ວິຊາການກັບທີ່ຜູ້ມີຄວາມສຳນານງານສະເພາະດ້ານ ໃນລະດັບທີ່ແນ່ນອນ;
20. ສົ່ງເສີມການຜະລິດ ດ້ວຍການນຳໃຊ້ແນວພັນເຂົ້າລຸ້ນ 3 (ແນວພັນສົ່ງເສີມ) ແນວພັນດີຂອງພືດໃນຂອບເຂດທົ່ວແຂວງ ໂດຍອີງໃສ່ເງື່ອນໄຂ ແລະ ທ່າແຮງຕົວຈິງຂອງທ້ອງຖິ່ນ ເພື່ອຕອບສະໜອງ ໃຫ້ແກ່ຂະບວນການຜະລິດສະບຽງອາຫານ ແລະ ສິນຄ້າໃຫ້ສາມາດບັນລຸຕາມຄາດໝາຍແຜນການ ທີ່ວາງໄວ້;
21. ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງການຜະລິດແນວພັນເຂົ້າລຸ້ນ3 (ແນວພັນສົ່ງເສີມ) ຂອງບັນດາຫົວໜ່ວຍທຸລະກິດ, ບໍລິສັດ, ໂຄງການຮ່ວມມືສູນ ແລະ ກຸ່ມຜະລິດກະສິກຳອອກໃບຢັ້ງ ຢືນຄຸນນະພາບ ໃຫ້ສອດຄ່ອງຕາມລະບຽບການ ແລະ ເຕັກນິກການຜະລິດ ເພື່ອຕອບສະໜອງໃຫ້ການ ຜະລິດສະບຽງອາຫານ ແລະ ເປັນສິນຄ້າ;
22. ສະຫຼຸບ, ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານ ປະຈຳເດືອນ, ເດືອນ, 3ເດືອນ, 6 ເດືອນ, 9ເດືອນ ແລະ ປະຈຳປີ, ແຜນຍຸດທະສາດ 5 ປີ, ເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ;
23. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

**ມາດຕາ 11 ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ**

ຂະແໜງລ້ຽງສັດ ແລະ ການປະມົງ ມີໜ້າທີ່ດັ່ງນີ້



ສະແກນດ້ວຍ CamScanner

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານກ່ຽວກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ, ສຸມໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດຂອງຂະແໜງການ ໂດຍສະເພາະ ສົ່ງເສີມການຜະລິດສັດ, ປາ ແລະ ໄຂ່ ຢູ່ພາຍໃນແຂວງ ເພື່ອສ້າງຖານລາຍຮັບທີ່ແຂງແຮງ ດ້ວຍການຫັນໃຫ້ເປັນແຜນງານ, ໂຄງການ, ພ້ອມທັງຈັດຕັ້ງປະຕິບັດໂຄສະນາເຜີຍແຜ່ ແລະ ເຂົ້າຮ່ວມກວດກາປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ;
3. ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດ ບັນດາກົດໝາຍ, ນິຕິກຳລຸ່ມກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ແຜນງານ ແລະ ໂຄງການລ້ຽງສັດ ແລະ ສັດນ້ຳເປັນສິນຄ້າ, ໂຄງການປຸງແຕ່ງຜະລິດຕະພັນສັດ ໃນແຕ່ລະຊະນິດສັດ ທີ່ຢູ່ພາຍໃນແຂວງຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
4. ຊຸກຍູ້ສົ່ງເສີມການຜະລິດທາດຊີ້ນໃຫ້ພຽງພໍ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການສູງ, ປອດໄພ ເພື່ອຊຶມໃຊ້ພາຍໃນຫຼຸດຜ່ອນການນຳເຂົ້າ, ຊຸກຍູ້ການລ້ຽງສັດ, ການປະມົງເປັນສິນຄ້າ ແບບເປັນຟາມ ຮູບແບບທີ່ທັນສະໄໝ ໂດຍມີການກຳນົດເຂດລ້ຽງຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດຕາມທ່າແຮງຂອງແຂວງ, ຊຸກຍູ້ສົ່ງເສີມການພັດທະນາວິສາຫະກິດ, ຟາມ, ຄອບຄົວຕົວແບບໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ, ມີຄຸນນະພາບໄດ້ມາດຕະຖານການຜະລິດສິນຄ້າ ເພື່ອສົ່ງອອກຕ່າງປະເທດໂດຍສອດຄ່ອງກັບມາດຕະຖານສຸຂານາໄມຂອງປະເທດຄູ່ຄ້າ;
5. ຊຸກຍູ້, ສົ່ງເສີມ ໃນການປະຕິບັດ ມາດຕະຖານການລ້ຽງສັດທີ່ດີ (GAHP), ຢັ້ງຢືນ, ຂຶ້ນທະບຽນບັນດາຟາມລ້ຽງ ສັດ-ສັດນ້ຳ, ໂຮງງານອາຫານສັດ, ໂຮງປະສົມອາຫານສັດ, ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ໂຮງປຸງແຕ່ງ ແລະ ສະຖານທີ່ເກັບຮັກສາຜະລິດຕະພັນສັດ-ສັດນ້ຳ, ຮ້ານຂາຍຢາປິ່ນປົວສັດ, ກົນຈັກ ແລະ ເຄື່ອງມືອຸປະກອນ ຮັບໃຊ້ການລ້ຽງ ສັດ ແລະ ການປະມົງ. ພັດທະນາການຂົນສົ່ງ ແລະ ຕະຫຼາດສິນຄ້າກ່ຽວກັບສັດ-ສັດນ້ຳ, ຄຸ້ມຄອງ, ກວດກາມາດຕະຖານການປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພໃນການປຸງແຕ່ງ, ການຫຸ້ມຫໍ່ ແລະ ອື່ນໆ ຢູ່ໃນໂຮງ ງານປຸງແຕ່ງຜະລິດຕະພັນສັດ;
6. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານກັກກັນສັດ, ການຄວບຄຸມການເຄື່ອນຍ້າຍຜະລິດຕະພັນສິນຄ້າກ່ຽວກັບສັດ, ຜະລິດຕະພັນສິນຄ້າກ່ຽວກັບການປະມົງ ແລະ ຜະລິດຕະພັນສິນຄ້າກ່ຽວກັບການສັດຕະວະແພດໃນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ລວມທັງການຢັ້ງຢືນດ້ານສຸຂະພາບສັດ ແລະ ສຸຂານາໄມ ຕາມການມອບໝາຍຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ, ກົມລ້ຽງສັດ ແລະ ການປະມົງ;
7. ຄົ້ນຄວ້າ ແລະ ສະເໜີຂັ້ນເທິງຂອງຕົນ ເພື່ອປັບປຸງບັນດານິຕິກຳ, ກົນໄກ, ລະບຽບການ, ຂັ້ນຂອດ ແລະ ສິ່ງກີດ ຂວາງທີ່ເປັນອຸປະສັກ ແກ່ການລົງທຶນ, ການດຳເນີນທຸລະກິດຂອງບັນດາບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຟາມ, ຄອບຄົວຕົວແບບໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບ, ຄົ້ນຄວ້າ ແລະ ປະກອບຄຳເຫັນ,



ສະແກນດ້ວຍ CamScanner

ໃຫ້ການປຶກສາ, ເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ ແລະ ການດຳເນີນທຸລະກິດກ່ຽວກັບການລ້ຽງ ສັດ, ສັດຕະວະແພດ ແລະ ການປະມົງ;

8. ພັດທະນາ, ວິເຄາະ-ວິໄຈ, ສ້າງຖານຂໍ້ມູນສະຖິຕິສັດ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບທີ່ດິນລ້ຽງສັດ ແລະ ແຫຼ່ງທີ່ຢູ່ອາໄສຂອງສັດນ້ຳ, ຂໍ້ມູນການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງຢ່າງເປັນລະບົບໂດຍການນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝໃຫ້ສາມາດເຊື່ອມໂຍງກັບລະບົບສະຖິຕິ ຂອງກົມລ້ຽງສັດ ແລະ ການປະມົງ;

9. ຊຸກຍູ້ ສົ່ງເສີມ ສະໜັບສະໜູນການພັດທະນາການນຳໃຊ້ແນວພັນສັດ-ສັດນ້ຳ, ການຜະລິດອາຫານສັດ ແລະ ການພັດທະນາກ່ຽວກັບທົ່ງຫຍ້າລ້ຽງສັດ, ບໍລິການດ້ານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ລວມທັງສົ່ງເສີມວຽກງານສະຫວັດດີການສັດ;

10. ຄົ້ນຄວ້າ ແລະ ສະເໜີ ເພື່ອຂຶ້ນທະບຽນອາຫານສັດ, ຢາສັດຕະວະແພດ, ຜະລິດຕະພັນການສັດຕະວະແພດ, ວັດຖຸດິບສຳລັບຜະລິດອາຫານສັດ, ແນວພັນ, ນ້ຳເຊື້ອ, ໄຕ່ອ່ອນຂອງສັດ-ສັດ ນ້ຳ, ພືດອາຫານ ສັດ, ພືດນ້ຳ, ຂະຫຍາຍຕາໜ່າງການນຳໃຊ້ຢາສັດຕະວະແພດ ພ້ອມທັງການສະໜອງ ອຸປະກອນການ ສັດຕະວະແພດ, ພັດທະນາລະບົບການສືບຢ້ອນຫຼັງປະຫວັດຂອງສັດ, ຜະລິດຕະພັນສັດ-ສັດນ້ຳ ດຳເນີນການຂຶ້ນທະບຽນພົມສັດ;

11. ເປັນເຈົ້າການໃນການຈັດຕັ້ງປະຕິບັດ ລະບົບເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມພະຍາດສັດ-ສັດນ້ຳ, ສືບຄົ້ນຫາພະຍາດ ແລະ ເກັບຕົວຢ່າງ ເພື່ອການວິໄຈບົ່ງມະຕິພະຍາດສັດ-ສັດນ້ຳ, ວິໄຈຄຸນນະພາບ-ຄວາມປອດໄພ ຂອງອາຫານສັດ, ພືດອາຫານສັດ, ແຫຼ່ງວັດຖຸດິບອາຫານສັດ, ຢາສັດຕະວະແພດ, ຄຸນນະພາບນ້ຳສຳລັບການລ້ຽງສັດ-ສັດນ້ຳ ແລະ ຜະລິດຕະພັນສັດ-ສັດນ້ຳ ລວມທັງການພັດທະນາລະບົບຄວາມປອດໄພທາງດ້ານຊີວະພາບຕິດຕາມ ແລະ ຈຳກັດເຊື້ອທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ;

12. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກລ້ຽງສັດ, ສັດຕະວະແພດ ແລະ ການປະມົງຕາມການອະນຸມັດຂອງແຂວງ ແລະ ກະຊວງກະສິກຳ ແລະ ສິ່ງແວດລ້ອມໃນແຕ່ລະໄລຍະໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

13. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານພັດທະນາ ດ່ານກວດກາສັດຕະວະແພດ, ຈຸດກວດກາຂອງເຂດປອດພະຍາດ ແລະ ເຂດຄວບຄຸມການລະບາດຂອງພະຍາດ ເພື່ອຄວບຄຸມການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສິນຄ້າປະມົງ ຕາມການມອບໝາຍຂອງຂັ້ນເທິງ;

14. ເປັນເຈົ້າການຄົ້ນຄວ້ານຳສະເໜີຕໍ່ຂັ້ນເທິງ ກ່ຽວກັບການປະກາດ ແລະ ຍົກເລີກເຂດລະບາດພະຍາດສັດ;

15. ຄຸ້ມຄອງ, ຕິດຕາມ, ກວດກາດ້ານວິຊາການ, ບັນດາທຸລະກິດ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ, ການຂ້າ ແລະ ປຸງແຕ່ງຜະລິດຕະພັນສັດ-ສັດນ້ຳ, ການກວດກາອະນາໄມຊີ້ນ, ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນສັດ-ສັດນ້ຳ, ອາຫານສັດ, ຢາສັດຕະວະແພດຢູ່ພາຍໃນແຂວງຕົນ;



ສະແກນດ້ວຍ CamScanner

16. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ຊັບພະຍາກອນມະນຸດ ເພື່ອອໍານວຍຄວາມສະດວກໃຫ້ແກ່ການປະຕິບັດວຽກງານໃນຂົງເຂດການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ, ຊຸກຍູ້ສະໜັບສະໜູນດ້ານເຕັກນິກ ແລະ ວິຊາການ ໃຫ້ແກ່ບັນດາສູນ, ສະຖານີຢູ່ຂັ້ນແຂວງ, ເມືອງ ແລະ ສະມາຄົມ, ກຸ່ມການຜະລິດ ແລະ ສະຫະກອນລວມທັງການສ້າງກອງທຶນພັດທະນາດ້ານການລ້ຽງສັດ-ສັດນໍ້າ ແລະ ການ ຮັກສາສຸຂະພາບສັດໃຫ້ມີຄວາມເຂັ້ມແຂງ;
17. ພົວພັນ, ຮ່ວມມື ແລະ ປະສານງານກັບຂະແໜງການອື່ນຢູ່ພາຍໃນ, ພາຍນອກແຂວງ ແລະ ອົງການຄຸ້ມຄອງທີ່ກ່ຽວຂ້ອງໃນການແລກປ່ຽນຂໍ້ມູນຂ່າວສານ, ສົ່ງເສີມການລົງ ທຶນ, ການຊ່ວຍເຫຼືອດ້ານວິຊາການ ເພື່ອພັດທະນາວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງພາຍໃນແຂວງໃຫ້ເຂັ້ມແຂງ;
18. ສະຫຼຸບ, ສັງລວມ ຜົນຂອງການຈັດຕັ້ງປະຕິບັດວຽກງານປະຈໍາອາທິດ, ເດືອນ, 3ເດືອນ, 6 ເດືອນ, 9ເດືອນ ແລະ 1ປີ ພ້ອມທັງສ້າງແຜນພັດທະນາ 5 ປີ, ແຜນຍຸດທະສາດ 10ປີ ຂອງ ວຽກງານລ້ຽງສັດ ແລະ ການປະມົງເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ;
19. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

**ມາດຕາ 12 ໜ້າທີ່ ຂອງຂະແໜງຊົນລະປະທານ**

ຂະແໜງຊົນລະປະທານ ມີໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ສະພາແຂວງ, ລັດຖະບັນຍັດຂອງປະທານປະເທດ, ດໍາລັດ, ມະຕິ, ນິຕິກໍາຂອງລັດຖະບານ, ນາຍົກ ລັດຖະມົນຕີ, ລັດຖະມົນຕີ ແລະ ຂອງແຂວງ;
2. ຈັດຕັ້ງຜັນຂະຫຍາຍນະໂຍບາຍຂອງພັກ, ດໍາລັດ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ນິຕິກໍາຕ່າງໆຂອງຂັ້ນເທິງວາງອອກມາເປັນແຜນງານ, ແຜນການ, ໂຄງການຂອງຕົນຕາມ ການແບ່ງຂັ້ນຄຸ້ມຄອງ;
3. ພັດທະນາຊົນລະປະທານ ແລະ ການລະບາຍຫັນໄປສູ່ການຄຸ້ມຄອງແບບມອບ-ໂອນຢ່າງ ຂາດຕົວ ແລະ ຫັນໄປສູ່ລະບົບຊົນລະກະເສດທີທັນສະໄໝເທື່ອລະກ້າວ;
4. ຂຶ້ນແຜນງົບປະມານການສຶກສາ, ການສໍາຫຼວດ-ອອກແບບ, ກໍ່ສ້າງ, ສ້ອມແປງ ແລະ ຕິດ ຕາມກວດກາ, ຊຸກຍູ້ການນໍາໃຊ້ນໍ້າຊົນລະປະທານ ປະຈໍາປີ ຫຼື ແຜນສຸກເສີນທີ່ໄດ້ ຮັບຜົນກະທົບຈາກໄພພິບັດ ໃຫ້ທ່ວງທັນກັບເວລາ;
5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນການສຶກສາ, ການສໍາຫຼວດ-ອອກແບບ, ການກໍ່ສ້າງຊົນລະປະທານ ແລະ ການລະບາຍ, ໂຄງການກໍ່ສ້າງຊົນລະປະທານໃຫ້ໄດ້ ຕາມມາດຕະຖານເຕັກນິກ ພ້ອມທັງເກັບກໍາ, ວິໄຈ, ສ້າງຖານຂໍ້ມູນ ເພື່ອພັດທະນາໂຄງ ການຊົນລະປະທານ, ການລະບາຍ ເພື່ອຮັບປະກັນ ການສະໜອງນໍ້າໃຫ້ເນື້ອທີ່ການຜະ ລິດກະສິກໍາຢ່າງທົ່ວເຖິງ ແລະ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງໃນການປັບປຸງລາຄາຫົວ ໜ່ວຍການກໍ່ສ້າງຊົນລະປະທານ;



ສະແກນດ້ວຍ CamScanner

6. ຕິດຕາມ ແລະ ຊຸກຍູ້ໜ່ວຍງານຊົນລະປະທານຂັ້ນເມືອງ, ສູນສົ່ງເສີມກະສິກໍາຂອງແຂວງ, ເມືອງ, ກຸ່ມບ້ານພັດທະນາ ແລະ ເຂດຈຸດສຸມເພື່ອຈັດຕັ້ງປະຕິບັດການຄຸ້ມຄອງ, ຈັດສັນ, ບໍລິຫານ ແລະ ເກັບຄ່ານໍ້າ ພ້ອມທັງເກັບກໍາ ແລະ ສະໜອງຂໍ້ມູນຂ່າວສານດ້ານຊົນລະປະທານຮັບໃຊ້ໃຫ້ແກ່ການກໍ່ສ້າງ, ຟື້ນຟູ ແລະ ສ້ອມແປງໂຄງການຊົນລະປະທານໃຫ້ສອດຄ່ອງກັບສະພາບຈຸດພິເສດ ແລະ ທ່າແຮງຂອງແຕ່ລະທ້ອງຖິ່ນ;
7. ຄຸ້ມຄອງລະບົບຊົນລະປະທານໃຫ້ມີປະສິດທິຜົນສູງ ພ້ອມທັງໃຫ້ການແນະນໍາ, ຝຶກອົບຮົມດ້ານວິຊາການແກ່ກຸ່ມນໍາໃຊ້ນໍ້າໃນການນໍາໃຊ້ນໍ້າຊົນລະປະທານ, ສ້າງບຸກຄະລາກອນກັບທີ່ຢ່າງເປັນເຈົ້າການ ແລະ ມີປະສິດທິຜົນພ້ອມທັງກຽມຄວາມພ້ອມໃນການເຂົ້າຮ່ວມຂະບວນການຕ້ານແລ້ງ, ຕ້ານຖ້ວມ ຂັ້ນສຸກເສີນຢ່າງເປັນເຈົ້າການ;
8. ສ້າງ, ປັບປຸງ, ຄຸ້ມຄອງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ, ສ້າງ, ພັດທະນາຕັ້ງກອງທຶນຢູ່ໃນໂຄງການຊົນລະປະທານໃຫ້ເຂັ້ມແຂງເຊັ່ນ: ກຸ່ມຜູ້ຊົມໃຊ້ນໍ້າຊົນລະປະທານ, ກຸ່ມຜະລິດ, ສະມາຄົມຜູ້ປະກອບການ ແລະ ສະຫະກອນທີ່ດໍາເນີນການຜະລິດໃນເຂດຊົນລະປະທານ;
9. ຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເປັນລະບົບ ແລະ ມີຄວາມໂປ່ງໃສສາມາດກວດສອບໄດ້;
10. ຄົ້ນຄວ້າ, ສັງລວມບັນດາເອກກະສານດ້ານເຕັກນິກ, ເງື່ອນໄຂຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງອອກອະນຸຍາດ, ສືບຕໍ່, ໂຈະ ຫຼື ຖອນໃບອະນຸຍາດດໍາເນີນທຸລະກິດກ່ຽວກັບກິດຈະການຊົນລະປະທານ ນໍາສະເໜີຕໍ່ພະແນກກະສິກໍາ ແລະ ສິ່ງແວດລ້ອມ ເພື່ອອະນຸຍາດຕາມກົດໝາຍ ແລະ ລະບຽບການທີ່ໄດ້ກໍານົດໄວ້;
11. ໃຫ້ຄໍາປຶກສາ ແລະ ຄຸ້ມຄອງກິດຈະການໂຄງການຊົນລະປະທານ, ການສຶກສາຄວາມເປັນໄປໄດ້, ສໍາຫຼວດ-ອອກແບບລະອຽດ ແລະ ກໍ່ສ້າງໂຄງການຂະໜາດກາງ 100 ເຮັກຕາຫາ 1,000 ເຮັກຕາ ແລະ ຂະໜາດນ້ອຍ 100 ເຮັກຕາຫາ 10 ເຮັກຕາ ໂດຍຂະແໜງຊົນລະປະທານເປັນຜູ້ສັງລວມ;
12. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານຊົນລະປະທານປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈໍາປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

**ມາດຕາ 13 ໜ້າທີ່ ຂອງຂະແໜງປ່າໄມ້**

ຂະແໜງປ່າໄມ້ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການໃນການປະຕິບັດກົດໝາຍ, ລະບຽບການ ແລະ ນິຕິກໍາຕ່າງໆກ່ຽວກັບວຽກງານປ່າໄມ້;
2. ຜັນຂະຫຍາຍ ແລະ ເຜີຍແຜ່ຍຸດທະສາດ, ນະໂຍບາຍ ຄຸ້ມຄອງປ່າໄມ້ແບບຍືນຍົງ, ສົນທິສັນຍາຕ່າງໆ ທີ່ ສປປ ລາວ ເປັນພາຄີອອກເປັນແຜນງານ, ໂຄງການ ແລະ ແຜນການດໍາເນີນງານອັນລະອຽດ;
3. ເປັນເຈົ້າການປະຕິບັດຍຸດທະສາດປ່າໄມ້, ນະໂຍບາຍຈັດສັນທີ່ດິນປ່າໄມ້ແບບມີສ່ວນຮ່ວມໃຫ້ແກ່ຊຸມຊົນ ແລະ ບ້ານທີ່ຕັ້ງຖິ່ນຖານຢູ່ໃນຂອບເຂດທີ່ດິນປ່າໄມ້ທີ່ບໍ່ສາມາດຍົກຍ້າຍ



ສະແກນດ້ວຍ CamScanner

ອອກຈາກຖິ່ນຖານເດີມ ໃຫ້ໄດ້ຮັບການພັດທະນາ ທັງປົກປັກຮັກສາປ່າໄມ້ໃຫ້ຍືນຍົງ;

4. ເປັນເຈົ້າການ ສັງລວມສ້າງຂໍ້ມູນຂ່າວສານດ້ານຊັບພະຍາກອນປ່າໄມ້ ທົ່ວແຂວງ ເພື່ອເປັນຖານຂໍ້ມູນໃຫ້ແກ່ການວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ມີຄວາມຍືນຍົງ;
5. ຄົ້ນຄວ້າ ປະກອບຄຳເຫັນ ໃນການປັບປຸງ ບັນດານິຕິກຳ, ກົນໄກ, ລະບຽບການ, ຂອດຂັ້ນ ແລະ ສິ່ງກີດຂວາງທີ່ເປັນອຸປະສັກແກ່ການດຶງດູດການລົງທຶນ, ເຄື່ອນໄຫວດຳເນີນທຸລະກິດ, ການຜະລິດຂອງບັນດາບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຄອບຄົວຕົວແບບ ກ່ຽວກັບກິດຈະການທາງດ້ານປ່າໄມ້ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບ;
6. ຊຸກຍູ້, ຕິດຕາມ ແລະ ຄຸ້ມຄອງການຂຸດຄົ້ນໄມ້ປູກ, ໄມ້ທຳມະຊາດລວມທັງພາຫະນະ, ວັດຖຸ, ອຸປະກອນ, ເຄື່ອງມືຂຸດຄົ້ນໄມ້, ຄຸ້ມຄອງ ແລະ ອະນຸຍາດນຳໃຊ້ຄ້ອນກາຕີໄມ້, ອະນຸຍາດຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍໄມ້ທ່ອນ, ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ, ໄມ້ສຳເລັດຮູບ, ຕໍໄມ້, ໄມ້ສົ້ນເຂົ້າ-ສົ້ນອອກ, ໄມ້ປະດັບ, ໄມ້ຄ້ຳແບບ, ໄມ້ຫຼັກຮົ້ວ, ໄມ້ຟືນ, ຖ່ານທຸກປະເພດ, ໄມ້ເປັນພະລັງ ງານ ແລະ ເຄື່ອງປ່າຂອງດົງ ລວມທັງສັດປ່າ, ພືດປ່າ;
7. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງງານໄມ້ຝານ, ໄມ້ບົດ, ໂຮງງານເຟີນີເຈີ້ໄມ້, ຮ້ານຂາຍໄມ້ ແລະ ເຄື່ອງເຟີນີເຈີໄມ້, ໂຮງງານຜະລິດເຈ້ຍ ໂດຍນຳໃຊ້ໄມ້ ເປັນວັດຖຸດິບ, ໂຮງເຟີນີເຈີ້ ແບບຄອບຄົວ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານພາຍໃນແຂວງ ໃຫ້ເປັນລະ ບົບຕ່ອງໂສ້ການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ;
8. ຄົ້ນຄວ້າ, ນຳສະເໜີຂໍອະນຸມັດ ພ້ອມທັງສະເໜີພິຈາລະນາ ໂຈະ, ຍົກເລີກ ບັນດາຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນໆ ກ່ຽວກັບວຽກງານຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມພາລະບົດບາດຂອງຕົນ;
9. ຄົ້ນຄວ້າ, ປະກອບຄຳເຫັນ ສະເໜີ ຂັ້ນເທິງ ພິຈາລະນາອະນຸມັດ, ອະນຸຍາດບຸກເບີກເນື້ອທີ່ດິນປ່າໄມ້, ໂຈະ, ຍົກເລີກບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງຢາງພາລາ, ໂຮງ ງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານ, ກິດຈະການລົງທຶນດ້ານປ່າ ໄມ້ ແລະ ດິນປ່າໄມ້ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມ ລະບຽບກົດໝາຍ;
10. ເປັນເຈົ້າການ ປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງຄົ້ນຄວ້າສ້າງຕັ້ງກຸ່ມຢາງພາລາ, ກຸ່ມໂຮງງານປຸງແຕ່ງຢາງພາລາ, ອຸດສາຫະກຳປຸງແຕ່ງໄມ້, ປຸງແຕ່ງເຄື່ອງປ່າຂອງດົງ ແລະ ກຸ່ມໂຮງ ງານຜະລິດຖ່ານ, ເຕົາເຜົາຖ່ານ ພ້ອມທັງຮ່າງນິຕິກຳກ່ຽວກັບການຄຸ້ມຄອງ;
11. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຢັ້ງຢືນ ບົດວິພາກເສດຖະກິດ-ເຕັກນິກ, ການຂຶ້ນທະບຽນ, ການຕໍ່ທະບຽນ ແລະ ໃບອະນຸຍາດດຳເນີນກິດຈະການ ກ່ຽວກັບປ່າໄມ້ ເຊັ່ນ: ເຄື່ອງປ່າຂອງດົງ, ທ່ອງທ່ຽວທຳມະຊາດ, ສັດປ່າ, ໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງຢາງພາລາ, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານຜະລິດຖ່ານຂາວ, ເຕົາເຜົາຖ່ານ ແລະ ອື່ນໆ ລວມທັງການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ພ້ອມທັງຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການລົງທຶນດ້ານປ່າໄມ້, ໂຄງການທີ່ຕິດພັນກັບປ່າໄມ້



ສະແກນດ້ວຍ CamScanner

ແລະ ທີ່ດິນປ່າໄມ້ ໃນເຂດ 03 ປະເພດປ່າ;

12. ເປັນເຈົ້າການ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດໍາເນີນວຽກງານ ສໍາຫຼວດ, ກໍານົດເຂດແດນ, ປັກຫຼັກໝາຍ, ກໍານົດເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນໍາໃຊ້ ໃຫ້ຊັດເຈນໃນເຂດ 03 ປະ ເພດປ່າ ແລະ ແທດເໝາະກັບຄວາມເປັນຈິງ ພ້ອມທັງເກັບກໍາຂໍ້ມູນທ່າແຮງໃນການທ່ອງທ່ຽວ ທໍາມະຊາດ ແລະ ສົ່ງເສີມການທ່ອງທ່ຽວຢູ່ເຂດປ່າໄມ້;
13. ເປັນເຈົ້າການ ສໍາຫຼວດ, ວາງແຜນ, ຈັດສັນ, ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ແລະ ພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມລະບົບ 03 ປະເພດປ່າລະດັບແຂວງ ໃຫ້ມີຄວາມຍືນຍົງ ລວມທັງເຂດອ່າງຮັບນໍ້າ, ເຂດປ່າໄມ້ຂັ້ນບ້ານ, ເຂດປູກໄມ້, ຟື້ນຟູປ່າ ແລະ ກໍານົດເຂດອະນຸລັກສະເພາະຊີວະນາໆພັນ, ສັດປ່າ ແລະ ພືດປ່າ, ພ້ອມທັງຄຸ້ມຄອງການຊື້-ຂາຍຊະນິດພັນສັດປ່າ ແລະ ພືດປ່າປະເພດຫວງຫ້າມ ແລະ ໃກ້ຈະສູນພັນຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນອື່ນ ທີ່ກ່ຽວຂ້ອງ;
14. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງສ້າງຕັ້ງປ້ອມຍາມຕາມຈຸດທີ່ຫຼໍ່ແຫຼມເພື່ອສະກັດກັ້ນການບຸກລຸກການທໍາລາຍປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້, ສັດປ່າ, ພືດປ່າ ແລະ ເຄື່ອງປ່າຂອງດົງ ຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ;
15. ເປັນເຈົ້າການກວດກາລາດຕາເວນ ຕ້ານ ແລະ ສະກັດກັ້ນຕໍ່ຜູ້ລະເມີດລະບຽບກົດໝາຍວ່າດ້ວຍປ່າໄມ້ເກັບກໍາຂໍ້ມູນຫຼັກຖານສະໜອງໃຫ້ແກ່ເຈົ້າໜ້າທີ່ກວດກາປ່າໄມ້ໃນການປະກອບສໍານວນຄະດີ ສົ່ງຟ້ອງ ຕາມຂະບວນການຍຸຕິທໍາ;
16. ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ດ້ານການຂະຫຍາຍພັນໄມ້, ພືດປ່າ, ສັດປ່າ ແລະ ເຄື່ອງປ່າຂອງດົງ, ຄຸ້ມຄອງປົກປັກຮັກສາກໍານົດເຂດແຫຼ່ງແກ່ນພັນໄມ້, ພັນພືດ, ພັນສັດປ່າ ໃຫ້ມີຄວາມຍືນຍົງ;
17. ຊຸກຍູ້-ຕິດຕາມ ແລະ ສົ່ງເສີມ ວຽກງານກວດກາລາດຕະເວນ, ປ້ອງກັນ, ສະກັດກັ້ນໄຟໄໝ້ລາມປ່າ ແລະ ພະຍາດບົ້ງແມງ, ການກ້າເບ້ຍໄມ້, ການປູກໄມ້, ການຟື້ນຟູປ່າ, ແຫຼ່ງແກ່ນພັນໄມ້ ແລະ ຮ້ານຂາຍເບ້ຍໄມ້, ການຂຶ້ນທະບຽນປ່າປູກ ແລະ ເຄື່ອງປ່າຂອງດົງ, ເຂດຟື້ນຟູປ່າ, ເຂດປູກປ່າທົດແທນ, ສວນສັດ, ຟາມລ້ຽງສັດປ່າ ແລະ ການຢັ້ງຢືນປ່າໄມ້, ພັນພືດ-ພັນສັດ ປ່າ ແລະ ຢັ້ງຢືນ ຕົ້ນໄມ້ທໍາມະຊາດ, ຕົ້ນໄມ້ປູກ ແລະ ຕົ້ນໄມ້ໃຫ້ໝາກ ຢູ່ໃນເນື້ອທີ່ດິນທີ່ເປັນກໍາມະສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
18. ເປັນເຈົ້າການ ຄົ້ນຄວ້າ ປະກອບຄໍາເຫັນອະນຸມັດ ຫຼື ບໍ່ອະນຸມັດ ຕໍ່ກັບການສະເໜີ ຂໍລົງທຶນເຊົ່າ ຫຼື ສໍາປະທານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຈະດໍາເນີນກິດຈໍາການໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້, ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງສໍາຫຼວດເກັບກໍາຂໍ້ມູນຂອບເຂດພື້ນທີ່ເປົ້າໝາຍ, ພ້ອມທັງຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການລົງທຶນໃນວຽກງານດັ່ງກ່າວ;
19. ເປັນເຈົ້າການຮັບ, ຄົ້ນຄວ້າພິຈາລະນາແກ້ໄຂຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບວຽກງານປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລວມທັງການສ້າງຕັ້ງ ແລະ ດໍາເນີນກົນໄກການແກ້ໄຂຄໍາຮ້ອງທຸກຢູ່ຂັ້ນທີ່ເໝາະສົມ;
20. ຄົ້ນຄວ້າດ້ານນະໂຍບາຍໃນການສ້າງ, ບໍາລຸງ, ຍົກລະດັບບຸກຄະລາກອນກ່ຽວກັບວຽກ



ສະແກນດ້ວຍ CamScanner

ງານປ່າໄມ້ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

21. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງສ້າງແຜນຈັດສັນປ່າໄມ້ຂັ້ນບ້ານແບບມີສ່ວນຮ່ວມ, ສ້າງສັນຍາຄຸ້ມຄອງປ່າໄມ້ ຂັ້ນບ້ານ, ຝຶກອົບຮົມດ້ານວິຊາການໃຫ້ປ່າໄມ້ຂັ້ນບ້ານທີ່ຕິດພັນກັບການຈັດສັນອາຊີບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ;
22. ສໍາຫຼວດເກັບຂໍ້ມູນເນື້ອທີ່ປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ຢູ່ເຂດ 03 ປະເພດປ່າເພື່ອວາງແຜນສົ່ງເສີມການປູກໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ ດ້ວຍຮູບແບບຕ່າງໆ ລວມທັງລະບົບກະສິກໍາ ແລະ ປ່າໄມ້ ແບບປະສົມປະສານ;
23. ຄົ້ນຄວ້າ, ປະກອບຄໍາເຫັນ ແລະ ນໍາສະເໜີສ້າງຕັ້ງ, ຂະຫຍາຍ, ຍົກລະດັບ, ຫັນປ່ຽນປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ ແລະ ເຂດອະນຸລັກພັນພືດ, ພັນສັດປ່າ ເພື່ອໃຫ້ຂັ້ນເທິງພິຈາລະນາ;
24. ເຂົ້າຮ່ວມ ສໍາຫຼວດປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ກໍານົດເຂດປ່າໄມ້, ທີ່ດິນປ່າໄມ້, ອັດຕາຄວາມປົກຫຸ້ມປ່າໄມ້, ເນື້ອທີ່ປ່າໄມ້, ສັດປ່າ ແລະ ຊີວະນາໆພັນໃນລະດັບແຂວງ, ຊຸກຍູ້, ຕິດຕາມການສໍາຫຼວດ ເພື່ອການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງໃນເຂດພັດທະນາພື້ນຖານໂຄງລ່າງ ທີ່ລັດຖະບານອະນຸມັດ, ພ້ອມທັງສັງລວມຂໍ້ມູນສໍາຫຼວດເພື່ອນໍາສະເໜີ ແຜນອະນຸມັດ ຂຸດຄົ້ນ ແລະ ເກັບກູ້ ປະຈໍາປີ;
25. ເຂົ້າຮ່ວມ ການຈັດຕັ້ງປະຕິບັດວຽກງານ, ໂຄງການ ແລະ ກິດຈະກໍາກ່ຽວກັບການປະຕິບັດນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມຕິດພັນກັບການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການ ທໍາລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມໃນເຂດທີ່ດິນປ່າໄມ້ ຕາມທິດສີຂຽວ ແລະ ຍືນຍົງ;
26. ເປັນເຈົ້າການ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຊຸກຍູ້ ລະດົມທຶນ ແລະ ສະສົມທຶນຈາກບັນດາກິດຈະ ການປ່າໄມ້ ແລະ ກິດຈະການທີ່ກ່ຽວຂ້ອງກັບການນໍາໃຊ້ຊັບພະຍາກອນປ່າໄມ້ ລວມທັງການປະກອບສ່ວນຈາກ ພາຍໃນ ແລະ ຕ່າງປະເທດ ເຂົ້າກອງທຶນປົກປັກຮັກ ສາປ່າໄມ້;
27. ເຂົ້າຮ່ວມ ກັບພາກສ່ວນທີ່ກ່ຽວຂ້ອງ ລົງສໍາຫຼວດເກັບກໍາຂໍ້ມູນ ແລະ ຮັບຮູ້ສິດການນໍາໃຊ້ທີ່ດິນໃນ 3 ປະເພດປ່າ, ພ້ອມທັງນໍາສະເໜີຂັ້ນເທິງ ອອກໃບຢັ້ງຢືນຮັບຮູ້ສິດ ຕາມລະບຽບການ;
28. ຍາດແຍ່ງເອົາການຮ່ວມມື ແລະ ຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິທະຍາສາດຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ບັນດາແຜນງານ, ແຜນການ, ໂຄງການ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງກັບປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ ສປປ ລາວ ເປັນພາຄີ;
29. ຄຸ້ມຄອງງົບປະມານ ແລະ ຊັບສິນຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອນໍາໃຊ້ເຂົ້າໃນວຽກງານຄຸ້ມຄອງປ່າໄມ້ ພ້ອມທັງສັງລວມ, ສະຫຼຸບລາຍງານ ຕາມກົດໝາຍແລະ ລະ ບຽບການ ທີ່ໄດ້ກໍານົດໄວ້;
30. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານປ່າໄມ້ ໃຫ້ໄປຕາມວຽກຈຸດສຸມ ຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ, ກົມປ່າໄມ້ ໃນແຕ່ລະໄລຍະບົນພື້ນຖານ



ສະແກນດ້ວຍ CamScanner

ຄວາມຖືກຕ້ອງ, ສອດ ຄ່ອງກັບກົດໝາຍ ແລະ ລະບຽບການ ໂດຍມີການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໃຫ້ມີຜົນສໍາເລັດ;

31. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານປະຈໍາອາທິດ, ປະຈໍາເດືອນ, ເດືອນ, 3 ເດືອນ, 6ເດືອນ, 9 ເດືອນ ແລະ ປະຈໍາປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
32. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ**

ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ ມີໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ, ດໍາລັດ, ລະບຽບການ, ມະຕິ, ຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ ແລະ ແຈ້ງການຕ່າງໆ ຂອງຂັ້ນເທິງວາງອອກ ກ່ຽວກັບວຽກງານຄຸ້ມຄອງ, ບໍລິຫານ ແລະ ພັດທະນາທີ່ດິນ ໃຫ້ມີຜົນສັກສິດ;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ ກ່ຽວກັບວຽກງານ ການຄຸ້ມຄອງ ແລະ ພັດທະນາທີ່ດິນມາເປັນແຜນງານ, ແຜນການ, ໂຄງການຂອງຂະແໜງ ການຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ; ຄົ້ນຄວ້ານໍາສະເໜີ, ສ້າງ ແລະ ປັບປຸງ ນິຕິກໍາໃຕ້ກົດໝາຍ ກ່ຽວກັບການຄຸ້ມຄອງ, ການນໍາໃຊ້, ການພັດທະນາທີ່ດິນ ແລະ ທີ່ດິນສະຫງວນຂອງລັດ ພ້ອມທັງຈັດຕັ້ງການໂຄສະນາ, ເຜີຍແຜ່ນິຕິກໍາດັ່ງກ່າວ ອອກສູ່ສັງຄົມຢ່າງທົ່ວເຖິງ;
3. ດໍາເນີນການສໍາຫຼວດ, ຈັດສັນ ແລະ ວາງແຜນນໍາໃຊ້ທີ່ດິນແຕ່ລະປະເພດ, ຈັດແບ່ງເຂດ, ຈັດແບ່ງປະເພດການນໍາໃຊ້ທີ່ດິນ, ວັດແທກຕອນດິນ, ປັກຫຼັກໝາຍເຂດທີ່ດິນ ທີ່ຕ້ອງ ສະຫງວນໄວ້ ເພື່ອການຜະລິດກະສິກໍາ, ການພັດທະນາອື່ນໆ ຕາມຄວາມເໝາະສົມ;
4. ສ້າງ, ຄຸ້ມຄອງ ແລະ ນໍາໃຊ້ຖານຂໍ້ມູນທີ່ດິນໃນທ້ອງຖິ່ນຂອງຕົນ ໃຫ້ເຊື່ອມຕໍ່ກັບລະບົບ ຂໍ້ມູນຂ່າວສານທີ່ດິນແຫ່ງຊາດ;
5. ຊຸກຍູ້ ບັນດາພະແນກການ ແລະ ອົງການປົກຄອງເມືອງ ໃນການສ້າງ, ປັບປຸງ ແລະ ຕິດ ຕາມປະເມີນຜົນ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນຂັ້ນແຂວງ, ຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນຂອງແຂວງ ແລະ ຂະແໜງການຂັ້ນເມືອງ;
6. ສຶກສາຈໍາແນກດິນ, ປະເມີນຄຸນນະພາບຂອງດິນ ແລະ ຄວາມເໝາະສົມຂອງທີ່ດິນ ຕໍ່ການປູກ ພືດຊະນິດຕ່າງໆ ເພື່ອກໍານົດແບ່ງເຂດການຜະລິດ ເປັນຕົ້ນເຂດປູກພືດອຸດສາຫະກໍາ, ເຂດປູກ ພືດສະບຽງ, ເຂດປູກເຂົ້າ, ເຂດປູກໄມ້ໃຫ້ໝາກ, ເຂດປູກໄມ້ເສດຖະກິດ, ເຂດປູກພືດອາຫານ ສັດ, ເຂດລ້ຽງສັດໃຫຍ່ ຕາມແລວທາງເສດຖະກິດ ເພື່ອຮັບໃຊ້ການລົງທຶນ ແລະ ວາງແຜນ ຊຸກຍູ້ ສົ່ງເສີມການຜະລິດພາຍໃນ ທົດແທນການນໍາເຂົ້າ ແລະ ການຜະລິດເພື່ອສົ່ງອອກ;
7. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານຜະລິດຝຸ່ນຊີວະ ພາບ, ຝຸ່ນອົງຄະທາດ ແລະ ໂຮງງານຝຸ່ນວິທະຍາສາດ, ກຸ່ມຊາວກະສິກອນ; ສ້າງແຜນການ ດຸນດ່ຽງຝຸ່ນໃນຂອບເຂດທ້ອງຖິ່ນຕົນ;



ສະແກນດ້ວຍ CamScanner

8. ຜັນຂະຫຍາຍຜົນການຄົ້ນຄວ້າ ແລະ ສາທິດຮູບແບບການນຳໃຊ້ທີ່ດິນກະສິກຳ, ການພັດທະນາທີ່ດິນກະສິກຳ, ດິນບໍລິເວນນ້ຳ, ດິນຖ່ານຕົມ, ການນຳໃຊ້ຝຸ່ນຕ່າງໆ ໃຫ້ຖືກຕ້ອງກັບສະພາບຂອງດິນ ຢູ່ໃນແຕ່ລະເຂດການຜະລິດ;
9. ສ້າງແຜນທີ່ຕາດິນ, ໃບຢັ້ງຢືນຜົນການສຳຫຼວດ-ວັດແທກທີ່ດິນ, ຢັ້ງຢືນການພັດທະນາທີ່ດິນ, ຢັ້ງຢືນການຫັນປ່ຽນການນຳໃຊ້ທີ່ດິນແຕ່ລະປະເພດພ້ອມທັງຕິດຕາມ, ກວດກາການນຳໃຊ້, ການເຊົ່າ, ສຳປະທານ ແລະ ການຫັນປ່ຽນປະເພດທີ່ດິນໄປສູ່ເປົ້າໝາຍອື່ນ; ຄົ້ນຄວ້າປະກອບຄຳເຫັນ ທາງດ້ານວິຊາການເພື່ອສະເໜີຕໍ່ຂັ້ນເທິງ;
10. ຕິດຕາມ ແລະ ຊຸກຍູ້ ວຽກງານການສຳຫຼວດ, ວັດແທກ, ສອບຖາມສິດນຳໃຊ້ທີ່ດິນ, ຂຶ້ນທະບຽນອອກໃບຕາດິນ, ການສ້າງສຳມະໂນທີ່ດິນ, ຈົດທະບຽນການເຄື່ອນໄຫວ ແລະ ປ່ຽນ ແປງ ສິດນຳໃຊ້ທີ່ດິນ;
11. ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການຂັ້ນແຂວງ, ເມືອງ ກ່ຽວກັບວຽກງານສຳຫຼວດ-ວັດແທກ, ຈັດສັນທີ່ດິນ, ສຶກສາຈຳແນກດິນ, ວາງແຜນນຳໃຊ້ທີ່ດິນ, ສ້າງແຜນທີ່ຕອນດິນ, ສ້າງແຜນທີ່ຕາດິນ, ສ້າງສຳມະໂນທີ່ດິນ, ການຂຶ້ນທະບຽນອອກໃບຕາດິນ, ສອບຖາມສິດນຳໃຊ້ທີ່ດິນ, ຈົດທະບຽນນິຕິກຳກ່ຽວກັບທີ່ດິນ, ການວິໄຈ, ການຜະລິດ, ນຳໃຊ້ຝຸ່ນ, ປັບປຸງດິນ ແລະ ການແກ້ໄຂບັນຫາຂອງດິນຕໍ່ການປູກພືດ;
12. ສ້າງນິຕິກຳໃຕ້ກົດໝາຍກ່ຽວກັບການຄຸ້ມຄອງທີ່ດິນ, ເຂດປະເມີນລາຄາທີ່ດິນ, ການພັດທະນາຮູບແບບການນຳໃຊ້ດິນ, ນ້ຳ ແລະ ຝຸ່ນ ເພື່ອຍົກສະມັດຕະພາບຜົນຜະລິດ ແລະ ສ້າງອາສາສະໝັກໝໍດິນຂັ້ນບ້ານ;
13. ສ້າງແຜນດຳເນີນງານ, ແຜນການ, ໂຄງການ ແລະ ແຜນງົບປະມານ ປະຈຳປີ ພ້ອມທັງຄຸ້ມຄອງ, ຕິດຕາມ, ກວດກາສະຫຼຸບ-ຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ, ບັນດາໂຄງການ ແລະ ກິດຈະກຳຕ່າງໆ ລວມທັງການໃຊ້ຈ່າຍງົບປະມານທີ່ຂະແໜງຮັບຜິດຊອບ ຢ່າງເປັນລະບົບຕໍ່ເນື່ອງ;
14. ພົວພັນ, ຮ່ວມມື ກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ, ຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ທຶນຮອນ ເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນງານ, ແຜນການ ແລະ ໂຄງການໃນຂົງເຂດວຽກງານຂອງຂະແໜງຕົນ;
15. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ໃຫ້ໄປຕາມວຽກຈຸດສຸມຂອງກະຊວງ, ວຽກຈຸດສຸມຂອງແຂວງ ໃນແຕ່ລະໄລຍະ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ; ມີການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ໄດ້ຜົນສຳເລັດ;
16. ສົມທົບກັບພາກສວນກ່ຽວຂ້ອງ, ເກັບກຳຂໍ້ມູນທີ່ດິນ ແລະ ສະຫຼຸບລາຍງານ ທີ່ຢູ່ໃນການຄຸ້ມຄອງການນຳໃຊ້ທີ່ດິນຂອງພະແນກການ, ອົງການ ແລະ ອົງການປົກຄອງເມືອງ; ເປັນເສນາທິການໃຫ້ແກ່ຄະນະນຳກະຊວງ ໃນການຄຸ້ມຄອງທີ່ດິນ 8 ປະເພດ ໃນຂອບເຂດທົ່ວແຂວງ ແລະ ຕິດຕາມກວດກາການນຳໃຊ້ທີ່ດິນຂອງແຂວງ ຕາມແຜນແມ່ບົດຈັດສັນ



ສະແກນດ້ວຍ CamScanner

ທີ່ດິນແຫ່ງຊາດ, ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ, ຍຸດທະສາດ ແລະ ແຜນການ ນຳໃຊ້ທີ່ດິນຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ;

17. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຂຶ້ນບັນຊີ ແລະ ຂຶ້ນທະບຽນອອກໃບຕາດິນລັດ ໃຫ້ກັບບັນດາພະແນກການ ແລະ ອົງການປົກຄອງເມືອງ, ຕິດຕາມກວດກາ ແລະ ປະເມີນຜົນການນຳໃຊ້ທີ່ດິນລັດ; ຄົ້ນຄວ້າ ແລະ ສະເໜີອົງການປົກຄອງແຂວງ ມອບ ຫຼື ຖອນສິດການນຳໃຊ້ທີ່ດິນ ຕາມແຜນຈັດສັນ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການ;

18. ປະສານສົມທົບກັບພາກສວນກ່ຽວຂ້ອງ ຄົ້ນຄວ້າ ການຊື້-ຂາຍ ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ໃຫ້ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ;

19. ເປັນເສນາທິການໃຫ້ແກ່ຄະນະນຳຂອງພະແນກ ໃນການຄຸ້ມຄອງທຸລະກິດອະສັງຫາລິມະຊັບທີ່ຕິດພັນກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ສົ່ງເສີມການພັດທະນາທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອປະກອບສ່ວນເຂົ້າໃນໂຄງການ ພັດທະນາພື້ນຖານໂຄງລ່າງ ພັດທະນາຕົວເມືອງ ແລະ ພັດທະນາອື່ນໆ ໃນຮູບການເຄື່ອນໄຫວທຸລະກິດ ພາຍໃຕ້ລະບຽບກົດໝາຍ ພ້ອມທັງຄຸ້ມຄອງບັນດາຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວທຸລະກິດໃນຮູບແບບ ຕ່າງໆກ່ຽວກັບທີ່ດິນ ດ້ວຍການຂຶ້ນທະບຽນ ແລະ ສ້າງລະບຽບການ ເພື່ອຄຸ້ມຄອງເປັນອັນສະເພາະຕາມລະບຽບກົດໝາຍ, ຕິດຕາມ ກວດກາການນຳໃຊ້ທີ່ດິນ ແລະ ການດຳເນີນທຸລະກິດ ກ່ຽວກັບທີ່ດິນ;

20. ເປັນໃຈກາງກວດກາ ແລະ ຢັ້ງຢືນສິດການນຳໃຊ້ທີ່ດິນຂອງລັດ ແລະ ທີ່ດິນຂອງພົນລະເມືອງລາວ ເພື່ອໃຫ້ເຊົ່າ ແລະ ສຳປະທານ, ໃຫ້ເຊົ່າທີ່ດິນລະຫວ່າງພົນລະເມືອງລາວ ກັບພົນລະເມືອງລາວ, ພົນລະເມືອງລາວກັບຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງດ້າວ ແລະ ໂຄງການລົງທຶນພັດທະນາ ໃນຂອບເຂດທົ່ວແຂວງ;

21. ຄົ້ນຄວ້າ, ແກ້ໄຂຂໍ້ຂັດແຍ່ງ ແລະ ຄຳຮ້ອງຟ້ອງ ກ່ຽວກັບທີ່ດິນ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນ; ເຂົ້າຮ່ວມ ແລະ ໃຫ້ຄຳຄິດເຫັນແກ່ອົງການຈັດຕັ້ງ ທີ່ມີສິດອຳນາດໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ທີ່ມີລັກສະນະທາງແພ່ງ ແລະ ທາງອາຍາ ທີ່ພົວພັນເຖິງການນຳໃຊ້ທີ່ດິນ ໃນຂອບເຂດທົ່ວແຂວງ;

22. ຄິດໄລ່ຄ່າທຳນຽມ, ຄ່າບໍລິການ ໃນວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ຕາມລັດຖະບັນຍັດຂອງປະທານປະເທດກຳນົດໄວ້;

23. ສະຫຼຸບ ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ປະຈຳອາທິດ, ເດືອນ, 3ເດືອນ, 6ເດືອນ, 9ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງປົກກະຕິ;

24. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;



ສະແກນດ້ວຍ CamScanner

**ມາດຕາ 15 ໜ້າທີ່ ຂອງຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ**

ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ມີໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ລັດຖະບັນຍັດ, ມະຕິຕົກລົງ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ,ລະບຽບການ, ແຈ້ງການ ແລະ ນິຕິກຳອື່ນໆຂອງຂັ້ນເທິງວາງອອກ;
2. ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ດຳລັດ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳຕ່າງໆ ຂອງຂັ້ນເທິງວາງອອກມາເປັນແຜນງານ, ແຜນການ, ໂຄງການຂອງໜ່ວຍງານຕົນ;
3. ຍາດແຍ່ງເອົາການຮ່ວມມື ແລະ ການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິທະຍາສາດ ຈາກພາຍໃນ ແລະ ພາຍນອກເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນງານ, ແຜນການໃນຂອບເຂດໃນຄວາມຮັບຜິດຊອບຂອງຕົນ ໃຫ້ມີປະສິດທິພາບ;
4. ເປັນເຈົ້າການ ໃນການຕິດຕາມຊຸກຍູ້ ບັນດາຂະແໜງການຂັ້ນແຂວງ ແລະ ຂັ້ນເມືອງ ຈັດຕັ້ງກວດກາ ປະເມີນຜົນ ຄວາມທຸກຍາກ ແລະ ການພັດທະນາ ໃນແຕ່ລະໄລຍະ ແລະ ເປັນຜູ້ສັງລວມ, ວິເຄາະ-ວິໄຈ ແລະ ສະຫຼຸບລາຍງານຂັ້ນເທິງ ເພື່ອພິຈາລະນາຮັບຮອງ ແລະ ປະກາດໃຊ້ຜົນການກວດກາ-ປະເມີນຜົນຄວາມທຸກຍາກ ແລະ ການພັດທະນາໃນທົ່ວແຂວງ;
5. ເປັນກອງເລຂາ ໃນຂົງເຂດວຽກງານພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ຈັດສັນພູມລຳເນົາ, ອາຊີບ ແລະ ຄຸ້ມຄອງ ເຊື່ອມໂຍງລະບົບຖານຂໍ້ມູນ, ສະໜອງ, ນຳໃຊ້ ແລະ ເຜີຍແຜ່ຂໍ້ມູນ ຂ່າວສານກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກໃຫ້ທົ່ວເຖິງ;
6. ເປັນເຈົ້າການ ປະສານສົມທົບກັບຂະແໜງການຂອງແຂວງ, ພາກສ່ວນກ່ຽວຂ້ອງຂອງເມືອງ ແລະ ບ້ານ ເພື່ອຄົ້ນຄວ້າກຳນົດຈຸດສຸມພັດທະນາທີ່ເປັນບຸລິມະສິດຂອງແຂວງ ແລະ ເມືອງໃນແຕ່ລະໄລຍະ; ລວມມີຈຸດສູມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບໝັ້ນຄົງ, ສະເພາະ ແລະ ທົ່ວໄປ ສ້າງບ້ານພັດທະນາ, ສ້າງບ້ານໃຫ່ຍໃຫ້ກາຍເປັນຕົວເມືອງໃນຊົນນະບົດ, ພ້ອມທັງເປັນເຈົ້າການຕິດຕາມ, ຊຸກຍູ້ ແລະ ກວດກາປະເມີນການພັດທະນາຢູ່ແຕ່ລະຈຸດສຸມໃຫ້ໄປຕາມແຜນການ,ໂຄງການໃຫ້ບັນລຸຄາດໝາຍທີ່ວາງໄວ້ ພ້ອມຮັບປະກັນໃຫ້ມີການຫັນ ປ່ຽນໃໝ່ ຢ່າງຈະແຈ້ງ;
7. ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກຳນົດແຜນການ, ໂຄງການລົງທຶນຂອງລັດກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກພ້ອມທັງຊຸກຍູ້, ຕິດຕາມ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດໃຫ້ໄດ້ຮັບຜົນດີ;
8. ສັງລວມ, ເກັບຂໍ້ມູນໃນການກຳນົດຈຸດຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນໃນເຂດເປົ້າຫມາຍຍົກຍ້າຍ ແລະ ແກ້ໄຂບັນຫາການເຄື່ອນຍ້າຍຂອງພົນລະເມືອງແບບຊະຊາຍ ແລະ ດຸ່ນດ່ຽງປະຊາກອນ ຫຼື ກຳລັງແຮງງານກັບພື້ນທີ່ຂັ້ນຕອນຈັດສັນ ພູມລຳເນົາ ແລະ ອາຊີບ ທີກຳນົດໄວ້ໃນກົດໝາຍ;
9. ຄົ້ນຄວ້າ, ກຳນົດຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບຂອງສູນກາງ ແລະ ທ້ອງຖິ່ນ (ຈຸດຍົກຍ້າຍປະຊາ ຊົນ, ຈຸດເຕົ້າໂຮມ), ຈຸດຈັດສັນສະເພາະແຕ່ລະໄລຍະພາຍໃນແຂວງ; ຄົ້ນຄ້ວາ, ສັງລວມ,



ສະແກນດ້ວຍ CamScanner

ສ້າງແຜນການຈັດສັນພູມລຳເນົາ ແລະ ອາຊີບ ຕາມປະເພດຂອງການຈັດສັນພູມລຳເນົາ ແລະ ອາຊີບແລ້ວນຳສະເໜີຕໍ່ຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບຕາມຂັ້ນຄຸ້ມຄອງ;

10. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານກອງທຶນພັດທະນາຊົນນະບົດ ແລະ ຫຼຸດ ຜ່ອນຄວາມທຸກຍາກ ເປັນຕົ້ນແມ່ນກອງທຶນພັດທະນາບ້ານ ແລະ ກອງທຶນອື່ນໆໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນສູງ ພ້ອມທັງສະຫຼຸບ, ຕີລາຄາໝາກຜົນຂອງການນຳໃຊ້ເງິນກອງທຶນ ເຂົ້າໃນວຽກງານຫຼຸດຜ່ອນຄວາມທຸກຍາກ ແລະ ພັດທະນາກຸ່ມບ້ານໃນທົ່ວແຂວງ;
11. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

**ມາດຕາ 16 ໜ້າທີ່ ຂອງຂະແໜງສິ່ງແວດລ້ອມ**

ຂະແໜງສິ່ງແວດລ້ອມ ມີໜ້າທີ່ດັ່ງນີ້:

1. ເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ດຳລັດ, ມະຕິ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ຜັນຂະຫຍາຍແຜນການ, ແຜນງານ, ໂຄງການທີ່ກ່ຽວຂ້ອງກັບວຽກງານສິ່ງແວດລ້ອມໃຫ້ເປັນໜ້າວຽກລະອຽດ ຂອງຂະແໜງຕົນພ້ອມທັງຮັບຜິດຊອບຈັດຕັ້ງປະຕິບັດໃຫ້ໄດ້ມີປະສິດທິຜົນສູງ;
2. ໂຄສະນາເຜີຍແຜ່ບັນດາ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການຕ່າງໆກ່ຽວກັບການຄຸ້ມຄອງສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດໃນຂອບເຂດທ້ອງຖິ່ນຂອງຕົນ;
3. ທົບທວນ ແລະ ນຳສະເໜີຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງເອົາບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງສົ່ງເສີມໃຫ້ຜູ້ມີສ່ວນຮ່ວມ ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນໄດ້ເຂົ້າຮ່ວມໃນຂະບວນການທົບທວນ ແລະ ເຂົ້າເຖິງຂໍ້ມູນ-ຂ່າວສານດັ່ງກ່າວຂອງໂຄງການລົງທຶນໃນຂອບເຂດທ້ອງຖິ່ນຕົນ;
4. ເຂົ້າຮ່ວມຂະບວນການທົບທວນ ແລະ ພິຈາລະນາຮັບຮອງເອົາບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດແບບລະອຽດ ຂອງໂຄງການລົງທຶນ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມຮັບຜິດຊອບ ໃນຂອບເຂດທ້ອງຖິ່ນຕົນ;
5. ປ້ອງກັນ ແລະ ຄວບຄຸມມົນລະພິດທາງອາກາດ, ນ້ຳ, ດິນ, ສຽງ, ແສງ, ສີ ແລະ ກິ່ນຈາກແຫຼ່ງປ່ອຍ ແລະ ແຫຼ່ງທົ່ວໄປ; ຄຸ້ມຄອງສານເຄມີເປັນພິດ, ວັດຖຸອັນຕະລາຍ, ສິ່ງເສດເຫຼືອອັນຕະລາຍ ແລະ ສິ່ງເສດເຫຼືອອື່ນໆ; ສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບມົນລະພິດ; ວາງແຜນປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນຂອບເຂດທ້ອງຖິ່ນຕົນ;



ສະແກນດ້ວຍ CamScanner

6. ຄຸ້ມຄອງ, ສົ່ງເສີມ ແລະ ສ້າງຈິດສຳນຶກ ໃນການປົກປັກຮັກສາສິ່ງແວດລ້ອມ, ປະຕິບັດແຜນການສ້າງຕົວເມືອງ ແລະ ຊຸມຊົນນະບົດຍືນຍົງດ້ານສິ່ງແວດລ້ອມ, ການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຄວາມສ່ຽງໄພພິບັດ ລວມທັງວຽກງານຂຽວ, ສະອາດງາມຕາ;
7. ເຂົ້າຮ່ວມຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມສັງ ຄົມ ແລະ ທຳມະຊາດ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆໃນຂອບເຂດທ້ອງຖິ່ນຕົນ;
8. ສ້າງແຜນຍຸດທະສາດ ແລະ ແຜນດຳເນີນງານດ້ານສິ່ງແວດລ້ອມ, ບົດລາຍງານສະພາບສິ່ງແວດລ້ອມ ແລະ ບົດລາຍງານສະພາບມົນລະພິດໃນຂອບເຂດທ້ອງຖິ່ນຕົນ; ຮ່ວມມືກັບພາຍໃນ ແລະ ສາກົນ ເພື່ອສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ;
9. ເກັບກຳສັງລວມ, ຄຸ້ມຄອງ, ເຜີຍແຜ່ ແລະ ພັດທະນາລະບົບຖານຂໍ້ມູນ-ຂ່າວສານສິ່ງແວດລ້ອມ, ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີ ຫຼື ບໍ່ມີແຜນຄຸ້ມຄອງສິ່ງແວດລ້ອມ, ລວມທັງໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດໃນຂອບເຂດທ້ອງຖິ່ນຕົນ;
10. ຈັດຕັ້ງປະຕິບັດຍຸດທະສາດການປ່ຽນແປງດິນຟ້າອາກາດ, ຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດ, ແຜນດຳເນີນງານການປ່ຽນແປງດິນຟ້າອາກາດ, ແຜນງານແຫ່ງຊາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ຂະບວນການສົ່ງເສີມໂຄງການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃນທ້ອງຖິ່ນຂອງຕົນ;
11. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໃນການເຊື່ອມສານວຽກງານຫຼຸດຜ່ອນຄວາມສ່ຽງໄພພິບັດ, ວຽກງານສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ຂະແໜງ ການອື່ນໃນຂອບເຂດທ້ອງຖິ່ນຕົນ;
12. ສຳຫຼວດ, ເກັບກຳຂໍ້ມູນ, ກຳນົດພື້ນທີ່ ທີ່ມີຄວາມສ່ຽງ, ຄວາມບອບບາງ, ສ້າງແຜນປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ສ້າງແຜນທີ່ຄວາມສ່ຽງດ້ານໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ໃນຂອບເຂດທ້ອງຖິ່ນຂອງຕົນ;
13. ສ້າງແຜນການເຄື່ອນໄຫວວຽກງານ, ແຜນງົບປະມານຂອງຂະແໜງຕົນ ເພື່ອສະເໜີເຂົ້າແຜນການລວມຂອງພະແນກ; ຄຸ້ມຄອງພາຫະນະ, ຊັບສິນ ແລະ ເອກະສານຂອງຂະແໜງການຕົນພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບລາຍງານ ຕໍ່ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ແລະ ຂັ້ນເທິງ ເປັນແຕ່ລະໄລຍະ;
14. ຄິດໄລ່ຄ່າທຳນຽມ, ຄ່າບໍລິການ ໃນວຽກງານຄຸ້ມຄອງສິ່ງແວດລ້ອມ ຕາມລັດຖະບັນຍັດຂອງປະທານປະເທດກຳນົດໄວ້;
15. ຕິດຕາມການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງຂອງຂະແໜງ ເພື່ອສະກັດກັ້ນປະກົດການລະເມີດມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ;



ສະແກນດ້ວຍ CamScanner

10. ສ້າງແຜນປັບປຸງ ແລະ ຂະຫຍາຍຕາໜ່າງສະຖານີພູມອາກາດ, ສະຖານີອຸຕຸກະເສດ, ຈຸດວັດແທກລະດັບນໍ້າ ແລະ ຈຸດວັດແທກປະລິມານນໍ້າຝົນໃນຂອບເຂດທີ່ຕົນຮັບຜິດຊອບ;
11. ພົວພັນ, ຮ່ວມມື ກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ, ຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ທຶນຮອນ ເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນງານ, ແຜນການ ແລະ ໂຄງການໃນຂົງເຂດວຽກງານຂອງຂະແໜງຕົນ;
12. ຄິດໄລ່ຄ່າທຳນຽມ, ຄ່າບໍລິການ ໃນວຽກງານຄຸ້ມຄອງ, ນຳໃຊ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ລວມທັງວຽກງານອຸຕຸນິຍົມ ແລະ ອຸທົກກະສາດ ຕາມລັດຖະບັນຍັດຂອງປະທານປະເທດກຳນົດໄວ້;
13. ຕິດຕາມການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງຂອງຂະແໜງ ເພື່ອສະກັດກັ້ນປະກົດການລະເມີດມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ;
14. ສະຫຼຸບ ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານ ປະຈຳອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງປົກກະຕິ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ.

**ມາດຕາ 18 ໜ້າທີ່ຂອງກອງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ກອງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ດຳລັດ, ມະຕິ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ຜັນຂະຫຍາຍແຜນການ, ແຜນງານ, ໂຄງການ ທີ່ກ່ຽວຂ້ອງກັບວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ເປັນໜ້າວຽກລະອຽດຂອງຂະແໜງການຕົນ ພ້ອມທັງຮັບຜິດຊອບຈັດຕັ້ງປະຕິບັດ ໃຫ້ໄດ້ມີປະສິດທິຜົນສູງ;
2. ໂຄສະນາເຜີຍແຜ່ບັນດາ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການຕ່າງໆ ແລະ ຄູ່ມືທາງດ້ານວິຊາການກ່ຽວກັບວຽກງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນຂອບເຂດທ້ອງຖິ່ນຂອງຕົນ;
3. ກວດກາ, ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຕົ້ນ: ທີ່ດິນ, ປ່າໄມ້, ທີ່ດິນປ່າໄມ້, ນໍ້າ, ແຮ່ທາດ, ສັດນໍ້າ-ສັດປ່າຫວງຫ້າມ ແລະ ຊີວະນາໆພັນຂອງບັນດາຂະແໜງການ, ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນຂອບເຂດທ້ອງຖິ່ນຂອງຕົນ;
4. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງແຜນການຄຸ້ມຄອງ ແລະ ຕິດຕາມ-ກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງບັນດາຂະແໜງການໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ດຳເນີນການຢູ່ໃນຂອບເຂດທ້ອງຖິ່ນຕົນ;
5. ກວດກາ ໂຄງການລົງທຶນ ລວມທັງຂະແໜງການລັດທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດພັນທະ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມໂຄງການ; ພັນທະ ແລະ ແຜນການສຳຫຼວດ-ຊອກຄົ້ນແຮ່ທາດ, ແຜນການຂຸດຄົ້ນ-ປຸງແຕ່ງແຮ່ທາດ; ພັນທະ ແລະ ແຜນ ການ



ສະແກນດ້ວຍ CamScanner

ຄຸ້ມຄອງປ່າ ໄມ້, ແຜນການປູກປ່າ, ແຜນການຂຸດຄົ້ນໄມ້ ແລະ ປຸງແຕ່ງໄມ້ ແລະ ກວດກາສະພາບການ, ເຫດການສິ່ງແວດລ້ອມອື່ນ ທີ່ເກີດຂຶ້ນໃນຂອບເຂດທ້ອງຖິ່ນຕົນ;

6. ກວດກາ ສິ່ງແວດລ້ອມຕົວເມືອງ, ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຕິດພັນກັບບັນຫາມົນລະພິດທາງສຽງ, ກິ່ນ, ນ້ຳເປື້ອນ, ສິ່ງເສດເຫຼືອ ແລະ ສານເຄມີ ຈາກຄຳສະເໜີ ແລະ ຄຳຮ້ອງຟ້ອງ ຂອງປະຊາຊົນພາຍໃນທ້ອງຖິ່ນຕົນ ລວມທັງປະສານສົມທົບພາກສ່ວນທີ່ກ່ຽວ ຂ້ອງໃນການແກ້ໄຂຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
7. ວາງແຜນໃນການກວດກາ ແລະ ຮັບມືເຫດການສຸກເສີນທາງດ້ານສິ່ງແວດລ້ອມ ທີ່ເກີດຈາກທຳມະຊາດ ຫຼື ເກີດຈາກກິດຈະການຕ່າງໆ ພ້ອມທັງປະເມີນຄວາມເສຍຫາຍ ແລະ ປະສານສົມທົບຂະແໜງການກ່ຽວຂ້ອງໃນການແກ້ໄຂ;
8. ສົມທົບກັບຂະແໜງການກ່ຽວຂ້ອງ ນຳສະເໜີຂັ້ນເທິງພິຈາລະນາໂຈະຊົ່ວຄາວ ຫຼື ຖອນເອກະສານ ທີ່ໄດ້ອອກອະນຸຍາດ ຫຼື ສະເໜີປິດກິດຈະການຖາວອນ ຕໍ່ໂຄງການທີ່ບໍ່ປະຕິບັດຕາມພັນທະ ຫຼື ສ້າງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂດຍອີງໃສ່ການລາຍງານຜົນກວດກາຕົວຈິງ ແລະ ການສະເໜີຂອງຫ້ອງການຂັ້ນເມືອງຕາມສາຍຕັ້ງ ຫຼື ຈາກຜົນການກວດກາຂອງຄະນະສະເພາະກິດ;
9. ເກັບກຳ, ສ້າງຖານຂໍ້ມູນ, ສະໜອງ ແລະ ແລກປ່ຽນຂໍ້ມູນ ກ່ຽວກັບວຽກງານກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
10. ຄົ້ນຄວ້າ ແລະ ສະເໜີຂັ້ນເທິງ ແຕ່ງຕັ້ງຄະນະສະເພາະກິດ ເພື່ອຕິດຕາມ, ກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນກໍລະນີເກີດເຫດການສຸກເສີນດ້ານສິ່ງແວດລ້ອມ ໃນຂອບເຂດທ້ອງຖິ່ນຕົນ;
11. ສະເໜີແຜນນຳໃຊ້ງົບປະມານຕິດຕາມ, ກວດກາສິ່ງແວດລ້ອມ ຂອງບັນດາຂະແໜງການ, ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນຂອບເຂດທ້ອງຖິ່ນຕົນ;
12. ຮັບ, ບັນທຶກການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງກ່ຽວກັບການກະທຳຜິດທາງອາຍາໃນຂົງເຂດວຽກງານກະສິກຳ ແລະ ສິ່ງແວດລ້ອມ;
13. ດຳເນີນຄະດີ ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ກະທຳຜິດກ່ຽວກັບ ທີ່ດິນ, ປ່າໄມ້, ທີ່ດິນປ່າໄມ້, ນ້ຳ, ແຮ່ທາດ, ສັດນ້ຳ-ສັດປ່າຫວງຫ້າມ, ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ພ້ອມກັນນັ້ນ ກໍ່ໃຫ້ສືບສວນ-ສອບສວນ ເຖິງເສັ້ນທາງການເງິນຂອງຜູ້ກະທຳຜິດຢ່າງຮັດກຸມ ແລະ ທຸກໆຄະດີຕ້ອງໄດ້ລາຍງານໃຫ້ພະແນກ, ອົງການປົກຄອງແຂວງ, ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຕິດຕາມ ແລະ ມີທິດຊີ້ນຳ;
14. ສຳເນົາສຳນວນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ນ້ຳ, ແຮ່ທາດ, ສັດນ້ຳ-ສັດປ່າຫວງຫ້າມ, ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອເກັບຮັກສາໃຫ້ເປັນລະບົບ ແລະ ສາມາດກວດສອບໄດ້;
15. ສະເໜີ ແລະ ລາຍງານຕໍ່ອົງການໄອຍະການປະຊາຊົນ ເພື່ອອອກຄຳສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ຕໍ່ເວລາການສືບສວນ ແລະ ຕໍ່ເວລາການກັກຂັງພາງ ພ້ອມທັງສະຫຼຸບການສືບ ສວນ-ສອບສວນ ແລະ ປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອພິ ຈາລະນາສັ່ງຟ້ອງຂຶ້ນສານ;



ສະແກນດ້ວຍ CamScanner

16. ສະຫຼຸບ ແລະ ລາຍງານວຽກງານຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ກວດກາຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ອົງການປົກຄອງແຂວງ ແລະ ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ;
17. ສະຫຼຸບ ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານ ປະຈຳອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງປົກກະຕິ;
18. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຫົວໜ້າພະແນກ ແລະ ຂັ້ນເທິງ;

**ມາດຕາ 19 ກອງຄຸ້ມຄອງອຸທິຍານແຫ່ງຊາດ ພູຫີນປູນ.**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ພູຫີນປູນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ, ດຳລັດ, ມະຕິຂອງລັດຖະບານ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນຂອງຂັ້ນເທິງວາງອອກ;
2. ຄົ້ນຄວ້າ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ມາເປັນແຜນງານ ແລະ ໂຄງການ ສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ ຮັບຜົນດີ;
3. ເຜີຍແຜ່, ເຊື່ອມຊຶມນະໂຍບາຍ, ລະບຽບ, ກົດໝາຍ ກ່ຽວກັບວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນເຂດອຸທິຍານແຫ່ງຊາດ ພູຫີນປູນ ພ້ອມທັງຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
4. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍ ບັນດາກົດໝາຍ, ລະບຽບການ ທີ່ກ່ຽວຂ້ອງ ແລະ ຄູ່ມືທາງດ້ານເຕັກນິກວິຊາການທັງພາຍໃນ ແລະ ສາກົນ ທີ່ຕິດພັນກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ໄດ້ຮັບຜົນດີ;
5. ຈັດຕັ້ງປະຕິບັດວຽກງານຕາມແຜນຄຸ້ມຄອງ-ຈັດສັນ ອຸທິຍານແຫ່ງຊາດ ພູຫີນປູນ ໂດຍປະສານງານກັບຂະແໜງການທີ່ກ່ຽວຂ້ອງ ທີ່ຂຶ້ນກັບເມືອງ ພາຍໃນແຂວງ;
6. ປະສານສົມທົບກັບ ຂະແໜງການສາຍຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ, ກຳນົດຂອບເຂດ ແລະ ປັກຫຼັກໝາຍ, ຕິດປ້າຍ, ວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ແນໃສ່ກຳນົດແຜນຈັດສັນ ແລະ ຄຸ້ມຄອງ ໃນແຕ່ລະໄລຍະໃຫ້ລະອຽດ ເຊັ່ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້, ເຂດກັນຊົນ ແລະ ເຂດໂຄງການ ທີ່ໄດ້ຮັບການອະນຸມັດຈາກລັດຖະບານ;
7. ຄົ້ນຄວ້າ ແລະ ກຳນົດ ຮູບແບບການພັດທະນາຊີວິດການເປັນຢູ່ ຄຽງຄູ່ກັບການອະນຸລັກແບບຍືນຍົງ ໃຫ້ແກ່ບ້ານທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານແຫ່ງຊາດ ພູຫີນປູນ ເພື່ອສ້າງເປັນບ້ານພັດທະນາ, ຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາ ທີ່ດິນປ່າໄມ້, ປ່າໄມ້



ສະແກນດ້ວຍ CamScanner

ແລະ ຊັບພະຍາກອນປ່າໄມ້ ຕິດພັນກັບການພັດທະນາກະສິກຳ ໃນຂອບເຂດທີ່ໄດ້ກຳນົດ ແລະ ຈັດສັນໄວ້ຕາມແຜນຈັດສັນ;

8. ເກັບກຳ, ສັງລວມ, ສ້າງ ແລະ ຄຸ້ມຄອງຂໍ້ມູນ-ຂ່າວສານ ດ້ານທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້, ຖິ່ນທີ່ຢູ່ອາໄສສຳຄັນ ຂອງຊະນິດພັນພືດ ແລະ ພັນສັດປ່າ ທີ່ຫາຍາກ ແລະ ໃກ້ຈະສູນພັນ ເພື່ອເປັນຖານຂໍ້ມູນ, ສູນຮຽນຮູ້ ໃຫ້ແກ່ການສຶກສາຄົ້ນຄວ້າກ່ຽວກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ;

9. ປຸກລະດົມ, ຂົນຂວາຍ, ໂຄສະນາເຜີຍແຜ່ ກົດໝາຍ, ລະບຽບການ ເພື່ອປູກຈິດສຳນຶກ ແລະ ສ້າງຄວາມ ເຂັ້ມແຂງໃຫ້ແກ່ປະຊາຊົນ ພ້ອມທັງຊຸກຍູ້ ອີງການປົກຄອງບ້ານ ໃນການສ້າງຕັ້ງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ແລະ ອອກລະບຽບການຄຸ້ມຄອງທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້;

10. ຄົ້ນຄວ້າ ແລະ ປະກອບຄຳເຫັນກ່ຽວກັບການສະເໜີຂໍດຳເນີນກິດຈະການສຶກສາຄົ້ນຄວ້າຊັບພະຍາກອນປ່າໄມ້, ພັນພືດ, ພັນສັດນ້ຳ ແລະ ສັດປ່າ, ການທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເພື່ອການອະນຸລັກສິ່ງແວດລ້ອມ ແລະ ສ້າງລາຍຮັບໃຫ້ທ້ອງຖິ່ນ, ເຂດເປົ້າໝາຍການພັດທະນາຂອງລັດຖະບານ;

11. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການ ຄຸ້ມຄອງ, ຕິດຕາມ, ກວດກາບັນດາກິດຈະການ ແລະ ໂຄງການເປັນຕົ້ນ: ການທ່ອງທ່ຽວ, ການຂຸດຄົ້ນແຮ່ທາດ, ຂຸດຄົ້ນ ແລະ ເຄື່ອນຍ້າຍຊັບພະຍາກອນປ່າໄມ້ ຈາກເຂດບຸກເບີກເນື້ອທີ່ການກໍ່ສ້າງໂຄງລ່າງພື້ນຖານໃນເຂດອຸທິຍານແຫ່ງຊາດ ພູຫີນປູນ ທີ່ໄດ້ຮັບອະນຸມັດຈາກລັດຖະບານ;

12. ຊຸກຍູ້ ແລະ ສົ່ງເສີມ ວຽກງານກ້າເບ້ຍ, ປູກໄມ້, ຟື້ນຟູປ່າ ແບບທຳມະຊາດ, ພືດເປັນຢາ ແລະ ເຄື່ອງປ່າຂອງດົງ ຕາມແຜນຈັດສັນ, ຄຸ້ມຄອງໃຫ້ມີຄວາມຍືນຍົງ;

13. ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງໃນການຕ້ານ ແລະ ສະກັດກັ້ນໄຟໄໝ້ລາມປ່າໃນເຂດອຸທິຍານແຫ່ງຊາດ ພູຫີນປູນ;

14. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງສຶກສາທ່າແຮງ ແລະ ຄວາມຕ້ອງການຂອງບ້ານກ່ຽວກັບການນຳໃຊ້ໄມ້, ໄມ້ພະລັງງານ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແນໃສ່ສ້າງແຫຼ່ງລາຍໄດ້ເພີ່ມທີ່ຕິດພັນກັບການຈັດສັນອາ ຊີບຄົງທີ່ໃຫ້ຄອບຄົວ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາການປະຕິບັດແຜນການນຳໃຊ້ ແລະ ລະບຽບການທີ່ໄດ້ກຳນົດ ໃຫ້ແຕ່ລະບ້ານ;

15. ຈັດຕັ້ງປະຕິບັດວຽກງານ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ແລະ ການຈ່າຍຄ່າບໍລິການສິ່ງແວດ ລ້ອມໃນເຂດອຸທິຍານແຫ່ງຊາດ ພູຫີນປູນ ໃຫ້ມີປະສິດທິຜົນ;

16. ເປັນເຈົ້າການກຳນົດຈຸດປ້ອມຍາມ ເຂົ້າ-ອອກ, ປ້ອມຍາມປ່າ ພ້ອມທັງດຳເນີນການກວດກາລາດຕະເວນ ຕາມຈຸດຫຼໍ່ແຫຼມ ຢ່າງເປັນປົກກະຕິ-ຕໍ່ເນື່ອງ ກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ເຊິ່ງໜ້າ ຕ້ອງໄດ້ ສັ່ງຢຸດຕິ, ກັກ, ຍຶດ, ເກັບກຳຂໍ້ມູນ ແລະ



ສະແກນດ້ວຍ CamScanner

**ມາດຕາ 21 ແບບແຜນວິທີເຮັດວຽກ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງ ມີແບບແຜນວິທີເຮັດວຽກ ດັ່ງລຸ່ມນີ້:

1. ທຸກການເຄື່ອນໄຫວຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງ ແມ່ນອີງໃສ່ຫຼັກການ ແລະ ລະບຽບຂອງອົງການປົກຄອງແຂວງ ແລະ ກະຊວງກະສິກຳ ແລະ ສິ່ງ ແວດລ້ອມ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ;
3. ມີການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະເປົ້າໝາຍ ໃນແຕ່ລະໄລຍະ;
4. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9ເດືອນ, ປະຈຳປີ ແລະ ກອງປະຊຸມວິສາມັນຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາ, ເກັບກຳສະພາບລວມ ແລະ ສະເພາະດ້ານຈາກຂົງເຂດວຽກງານສັງລວມລາຍງານ ໃຫ້ອົງການປົກຄອງແຂວງ ແລະ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 22 ງົບປະມານ ແລະ ຕາປະທັບ**

ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ມີງົບປະມານ ແລະ ຕາປະທັບເປັນຂອງຕົນເອງ ເພື່ອໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 23 ການຈັດຕັ້ງປະຕິບັດ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງ, ຫ້ອງການ, ຂະແໜງ, ກອງ, ອົງການປົກຄອງເມືອງ, ພະແນກການອ້ອມຂ້າງແຂວງ; ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 726/ຈຂ, ລົງວັນທີ 18 ພຶດສະພາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຂໍ້ຕົກລົງ ສະບັບເລກທີ 1478/ຈຂ, ລົງວັນທີ 14 ສິງຫາ 2024 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ.

**ເຈົ້າແຂວງ**

ວັນໄຊ ພອງສະຫວັນ

**+ ບ່ອນນຳສົ່ງ:**

1. ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ 01 ສະບັບ;
2. ຄະນະຈັດຕັ້ງແຂວງ 01 ສະບັບ;
3. ເກັບມ້ຽນ 01 ສະບັບ.